ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ.....068.....ບທວລ

ນະຄອນຫຼວງວຽງຈັນ, ວັນທີ.....24 APR 2026.....

ຮຽນ : ທ່ານ ຜູ້ຖືຮຸ້ນຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
ເລື່ອງ : ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025

- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 31/3/2026.
- ອີງຕາມບັນຊີທະບຽນຜູ້ຖືຮຸ້ນຈາກສຳນັກງານຕະຫຼາດຫຼັກຊັບລາວ.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ບທວລ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໃນວັນທີ 4/5/2026 ເວລາ 09:30 ໂມງ,ເລີ່ມລົງທະບຽນເວລາ 9:00-09:30 ໂມງ, ທີ່ຫ້ອງປະຊຸມໃຫ່ຍຊັ້ນ 4 ສຳນັກງານໃຫ່ຍ ຂອງບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ການຄ້າ ແລະບໍລິການ ຂາອອກ - ຂາເຂົ້າ (ພກອ) ບ້ານ ສີໄຄທົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປລາວ ເພື່ອພິຈາລະນາ ແລະຮັບຮອງເອົາມະຕິ ຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດ ບທວລ ໄດ້ແຈ້ງໃຫ້ຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ 17/4/2026 ເປັນມື້ປິດ ປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ສະນັ້ນ, ບໍລິສັດ ບທວລ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນ ຈາກບໍລິສັດ ຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ ຈະຕ້ອງໄດ້ເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານ ເຂົ້າໃນການເຂົ້າຮ່ວມ ກອງປະຊຸມ (ມີລະຫັດບາໂຄດ) ພ້ອມເອກະສານຄັດຕິດຕ່າງໆຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະ ບຽນເຂົ້າຮ່ວມກອງປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານ ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເມ້ຍເຫຼີຍ

ໜັງສືເຊີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ວັນອັງຄານ, ທີ 4 ພຶດສະພາ 2026

ເວລາ 9:30 ໂມງ

ຢູ່ທີ່ ຫ້ອງປະຊຸມໃຫ່ຍ ຊັ້ນ 4

ບ້ານ ສີໄຄທົ່ງ, ເມືອງສີໂຄດຕະບອງ

ນະຄອນຫຼວງວຽງຈັນ, ສປປລາວ

ເອກະສານຄັດຕິດ

1. ວາລະກອງປະຊຸມຜູ້ຖືຮຸ້ນ ບທວ ປະຈຳປີ 2025
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024
3. ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຜູ້ຖືຮຸ້ນຄັ້ງທີ 1 ປີ 2025
4. ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2025
5. ບົດລາຍງານການເງິນ ປະຈຳປີ 2025
6. ການສ້າງຕັ້ງບໍລິສັດ ບໍລິຫານ ແບຣນການເຟ ຈີແອລຊີ ຈຳກັດ
7. ສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບພູຜາບ໋ວ
8. ການປ່ຽນຊື່ ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ
9. ການປ່ຽນຂາຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ
10. ການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນຂອງບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ
11. ແບບຟອມໃບມອບສິດ.
12. ແຜນທີ່ຕັ້ງຂອງກອງປະຊຸມສາມັນຜູ້ຖືຮຸ້ນ

ໝາຍເຫດ

1. ຜູ້ຖືຮຸ້ນທຸກໆທ່ານຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆເລີ່ມແຕ່ວັນທີ 27/04/2026 ຢູ່ຕະຫຼາດຫຼັກຊັບ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ ບ້ານ ໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ ໂທລະສັບ (856-21) 454361, ແຟັກ (856-21) 454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດວ້ຍຕົນເອງ ກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **<u>ເອກະສານຄັດຕິດ 11</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມກອງປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມ ກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນນີ້ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະ ແລະໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການ ຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບສົ່ງເຖິງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຊັ້ນ 1, ພະແນກເລຂານຸການ ບໍລິສັດ, ບ້ານ ໜອງບອນ, ເມືອງໄຊເສດຖາ ນະຄອນຫລວງວຽງຈັນ ສປປລາວ ແລະ ກະລຸນາສົ່ງເຖິງບໍລິສັດ ກ່ອນວັນທີ 4/05/2026.
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ກະລຸນາສອບຖາມ ທ່ານ ນາງ ຄຳມີ (856-20) 55966610 ໃນໂມງລັດຖະການ.

ຄຳແນະນຳກ່ຽວກັບການລົງຄະແນນສຽງ

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ.
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
3. ໃນການລົງຄະແນນສຽງຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນຕ້ອງລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະຮວບລວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ຂອງກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ ທັງໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 143 ຂອງກົດໝາຍວ່າ ດ້ວຍວິສາຫະກິດ.

ເອກະສານຄັດຕິດ 01

ວາລະຂອງກອງປະຊຸມ
ສາມັນຜູ້ຖືຮຸ້ນ ບທອລ ປະຈຳປີ 2025

• **ວາລະທີ 01** : ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ໄດ້ຈັດຂຶ້ນໃນວັນທີ 29 ເມສາ 2025, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 02 ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ :

ບົດບັນທຶກກອງປະຊຸມມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາ ລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024, ວັນທີ 29 ເມສາ 2025.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ ຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02: ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025.

ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 ໄດ້ຈັດຂຶ້ນໃນວັນທີ 23 ທັນວາ 2025, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 03 ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ :

ບົດບັນທຶກກອງປະຊຸມມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025, ວັນທີ 23 ທັນວາ 2025.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ ຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03: ພິຈາລະນາ ແລະຮັບຮອງ ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2025

ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 31/3/2026 ເຊິ່ງມີເນື້ອໃນລາຍລະອຽດ ໃນເອກະສານຄັດຕິດ 04.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ຜົນການດຳເນີນທຸລະກິດປະຈຳປີ 2025.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ ຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04 : ພິຈາລະນາ ແລະຮັບຮອງ ບົດລາຍງານການເງິນປະຈຳປີ 2025

ບົດລາຍງານການເງິນປະຈຳປີ 2025 ແມ່ນໄດ້ຜ່ານການກວດສອບຢ່າງຖືກຕ້ອງຈາກ ບໍລິ ສັດການ ສອບພາຍນອກ EY ມີ<u>ເອກະສານຄັດຕິດ 05</u> ,ເຊິ່ງໄດ້ມີການລາຍງານຕໍ່ກອງປະຊຸມສະ ພາບໍລິຫານ ຄັ້ງ ວັນທີ 31/3/2026.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ເອກະສານລາຍງານການເງິນປະຈຳປີ 2025.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05 : ພິຈາລະນາ ແລະຮັບຮອງ ກ່ຽວກັບການສ້າງຕັ້ງບໍລິສັດ ບໍລິຫານ ແບຣນກາເຟ ຈີແອລຊີ ຈຳກັດ

ການສ້າງຕັ້ງບໍລິສັດ ບໍລິຫານ ແບຣນກາເຟ ຈີແອລຊີ ຈຳກັດ,ທີ່ໄດ້ລາຍງານຕໍ່ກອງປະຊຸມສະພາບໍລິ ຫານ ຄັ້ງວັນທີ 31/3/2026 ເຊິ່ງມີເນື້ອໃນລາຍລະອຽດ ໃນ<u>ເອກະສານຄັດຕິດ 06</u>

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ການສ້າງຕັ້ງບໍລິສັດ ບໍລິຫານ ແບຣນກາເຟ ຈີແອລຊີ ຈຳກັດ

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06 : ພິຈາລະນາ ແລະຮັບຮອງ ສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບພູຜາບ໋ວ

ສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບພູຜາບ໋ວ ມີທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 31/3/2026 ເຊິ່ງມີເນື້ອໃນລາຍລະອຽດໃນ<u>ເອກະສານຄັດຕິດ 07</u>

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບ ຮອງເອົາ ສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບພູຜາບ໋ວອ້ັງວຽງ

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 07: ພິຈາລະນາ ແລະຮັບຮອງ ການປ່ຽນຊື່ ບໍລິສັດ ບໍລິການອາງສະແດງສາກົນລາວຈຳກັດຜູ້ ດຽວ

ການປ່ຽນຊື່ ບໍລິສັດ ບໍລິການອາງສະແດງສາກົນລາວ ຈຳກັດຜູ້ດຽວ ທີ່ໄດ້ລາຍງານຕໍ່ກອງປະຊຸມ ສະພາບໍລິຫານ ຄັ້ງວັນທີ 31/3/2026 ເຊິ່ງມີເນື້ອໃນລາຍລະອຽດ ໃນ<u>ເອກະສານຄັດຕິດ 08</u>

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບ ຮອງເອົາ ການປ່ຽນຊື່ ບໍລິສັດ ບໍລິການອາງສະແດງສາກົນລາວ ຈຳກັດຜູ້ດຽວ

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງ

ຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 08 :ພິຈາລະນາ ແລະຮັບຮອງ ການປ່ຽນຂາຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ

ການປ່ຽນຂາຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດທີ່ໄດ້ລາຍງານຕໍ່ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 31/3/2026 ເຊິ່ງມີເນື້ອໃນລາຍລະອຽດ ໃນ<u>ເອກະສານຄັດຕິດ 09</u>

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ການປ່ຽນຂາຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 09: ພິຈາລະນາ ແລະຮັບຮອງ ບການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນຂອງ ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ

ການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນຂອງ ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ ທີ່ໄດ້ລາຍງານຕໍ່ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 31/3/2026 ເຊິ່ງມີເນື້ອໃນລາຍລະອຽດ ໃນ<u>ເອກະສານຄັດຕິດ 10</u>

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນຂອງ ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ເອກະສານຕິດຄັດ 02

ບົດບັນທຶກກອງປະຊຸມ
ສາມັນຜູ້ຖືຮຸ້ນ ປະຈຳປີ 2024 ຂອງ ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ.....098.....ບທອລ
ນະຄອນຫຼວງວຽງຈັນ, ວັນທີ.....09 MAY 2025.....

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024
ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ປະຊຸມເມື່ອວັນທີ 29/04/2025 ເວລາ 09:00 - 11:00 ໂມງ ທີ່ຫ້ອງປະຊຸມຊັ້ນ 04 ສຳນັກງານໃຫຍ່ຂອງບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳອຸດສາຫະກຳບໍລິການ ແລະການຄ້າຂາອອກ-ຂາເຂົ້າ. ປະທານກອງປະຊຸມໂດຍທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເຊິ່ງມີຜູ້ເຂົ້າຮ່ວມກອງປະຊຸມຕົວຈິງ 23 ທ່ານ, ໃນນັ້ນມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 10 ທ່ານ ແລະ ມອບສັນທະ 13 ທ່ານ, ມີຮຸ້ນລວມກັນທັງໝົດ 35.601.300 ຮຸ້ນ ເທົ່າກັບ 89% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ກົດລະບຽບຂອງບໍລິສັດ.

ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະ ແນະນຳຜູ້ເຂົ້າຮ່ວມປະຊຸມ ດັ່ງນີ້:

1. ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍ ບໍລິສັດ LCTC
2. ທ່ານ ທອງປົນ ກິ່ງຄຳເພັດ ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດ ພກອ
3. ທ່ານ ຕິ໋ງ ຢູ່ຕິ໋ງ ກຳມະການສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫຍ່ ບໍລິສັດ LCTC
4. ທ່ານ ຈ່າງ ຈິ໋ງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນ ບໍລິສັດ LCTC
5. ທ່ານ ຫວັ່ງ ຫຸ໋່ຍ ກຳມະການສະພາບໍລິຫານ ທັງເປັນນັກວິສະວະກອນໃຫຍ່ ບໍລິສັດ LCTC
6. ທ່ານ ສົມທະນູ ສົມຟອງບຸດຕະຂັນ ກຳມະການສະພາບໍລິຫານ ທັງເປັນຮອງຜູ້ອຳນວຍການໃຫຍ່ ບໍລິສັດ LCTC
7. ທ່ານ ວິຄຳແດງ ອິນທະໄຊ ກຳມະການສະພາບໍລິຫານ ອິດສະຫຼະ ບໍລິສັດ LCTC ທັງເປັນຮອງຫົວໜ້າພະແນກການເງິນ-ການບັນຊີ DAI
8. ທ່ານ ນາງ ວັນນະພອນ ສຸນັນທາ ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ
9. ທ່ານ ນາງ ວັ໋ງອຸໄທ ມຸລຣັຕນ ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ
10. ທ່ານ ອັດສະວິນ ຂັນທະວົງ ວິຊາການ ພະແນກຈົດທະບຽນ ແລະ ເປີດເຜີຍຂໍ້ມູນ ຕລຊລ
11. ທ່ານ ນາງ ຄຳມີ ພົມສີຄຳລາ ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ແຕ່ລະວາລະຢ່າງເປັນທັງການ ເຊິ່ງກອງປະຊຸມຄັ້ງນີ້ ມີຂໍ້ສະເໜີພິຈາລະນາທັງໝົດ 06 ຂໍ້, ແຕ່ລະຂໍ້ໄດ້ພິຈາລະນາ, ມີຄຳເຫັນ ແລະ ລົງຄະແນນສຽງ ດັ່ງນີ້:

ວາລະທີ 01 : ພິຈາລະນາ ແລະຮັບຮອງ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ.

ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍ ບໍລິສັດ LCTC ໄດ້ລາຍງານ

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ ຊີມັງລາວ ມະຫາຊົນ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 02 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02 : ພິຈາລະນາ ແລະຮັບຮອງ ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງ ກຸ່ມ ບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCTC ໄດ້ລາຍງານ ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 03 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ທ່ານ ກຽດສຸວັນ ບຸນວິໄລ ຕາງໜ້າ ບໍລິສັດ ຫຼັກຊັບລາວ ຈີນ ໄດ້ປະກອບຄຳເຫັນ ຄື :

ການດຳເນີນທຸລະກິດຂອງກຸ່ມບໍລິສັດ ເປັນຫຍັງຄືມີຫຼາຍທຸລະກິດແທ້.

ຈາກນັ້ນ ທ່ານ ເນ້ຍເຫຼຍ ປະທານສະພາບໍລິຫານ ໄດ້ຊີ້ແຈ້ງຕໍ່ບັນຫາດັ່ງກ່າວວ່າ ເປັນແຜນການຂອງ ບໍລິສັດ ແລະການເຮັດຫຼາຍກິດຈະການແມ່ນເພື່ອຈະສ້າງລາຍຮັບອີກຫຼາຍຊ່ອງທາງໃຫ້ກັບບໍລິສັດ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03 : ພິຈາລະນາ ແລະຮັບຮອງ ບົດລາຍງານວຽກງານການເງິນປະຈຳປີ 2024 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ທ່ານ ຈ່າງ ຈິງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນຂອງ ບໍລິສັດ LCTC ໄດ້ລາຍບົດລາຍງານວຽກງານການເງິນປະຈຳປີ 2024 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 04 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04 : ພິຈາລະນາ ແລະຮັບຮອງ ກ່ຽວກັບການອ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ

ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCTC ໄດ້ລາຍງານກ່ຽວກັບການວ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 05 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05 : ພິຈາລະນາ ແລະຮັບຮອງກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂລ ການຄ້າ ຈຳກັດ

ທ່ານ ເນ້ຍ ເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCTC ໄດ້ລາຍງານກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂລ ການຄ້າ ຈຳກັດ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 06 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06 : ພິຈາລະນາ ແລະຮັບຮອງກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ

ທ່ານ ເນ້ຍເຫຼຍ ປະທານສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫ່ຍຂອງ ບໍລິສັດ LCTC ໄດ້ລາຍງານກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 07 ຂອງເອກະສານກ່ຽວກັບກອງປະຊຸມ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 35.601.300 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຈາກນັ້ນ, ທ່ານ ສິນທະນຸ ສົມຟອງບຸດຕະຂັນ ຜູ້ຄວບຄຸມຄະແນນສຽງ ໄດ້ນັບກວດຜົນການລົງຄະແນນສຽງ ແລະ ແຈ້ງຜົນການລົງຄະແນນສຽງຂອງແຕ່ລະຂໍ້ພິຈາລະນາຕໍ່ກອງປະຊຸມ.

ສຸດທ້າຍ, ປະທານກອງປະຊຸມໄດ້ປະກາດວ່າ ຂໍ້ສະເໜີພິຈາລະນາທັງໝົດ 06 ຂໍ້ໃນກອງປະຊຸມຄັ້ງນີ້ແມ່ນຜ່ານໄປດ້ວຍຜົນສຳເລັດອັນຈົບງາມ, ພ້ອມກັນນັ້ນ, ໄດ້ກ່າວປິດກອງປະຊຸມໃນເວລາ 11:00 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ

ເນ້ຍເຫຼຍ

ຜູ້ບັນທຶກ

ເອກະສານຕິດຄັດ 03

ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1
ປະຈຳປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ອັດທະມະທຳລາວ ມະຫາຊົນ

ເລກທີ 261 /ບທລ

ນະຄອນຫຼວງວຽງຈັນ, ວັນທີ 30 DEC 2025

ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025
ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ກອງປະຊຸມຈັດຂຶ້ນໃນວັນທີ 23/12/2025 ເວລາ 09:00 - 11:45 ໂມງ ທີ່ຫ້ອງປະຊຸມຊັ້ນ 04 ສຳນັກງານໃຫຍ່ຂອງລັດວິສາຫະກິດ ພກອ. ປະທານກອງປະຊຸມໂດຍທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເຊິ່ງມີຜູ້ເຂົ້າຮ່ວມກອງປະຊຸມຕົວຈິງ 16 ທ່ານ, ໃນນັ້ນມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 5 ທ່ານ ແລະ ມອບສັນທະ 19 ທ່ານ, ມີຮຸ້ນລວມກັນທັງໝົດ 28.059.000 ຮຸ້ນ ເທົ່າກັບ 70% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ກົດລະບຽບຂອງບໍລິສັດ.

ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະ ແນະນຳຜູ້ເຂົ້າຮ່ວມປະຊຸມ ດັ່ງນີ້:

1. ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານ LCTC, ຜູ້ອຳນວຍການໃຫຍ່ DAI
2. ທ່ານ ຫຼີ ຮ້າວ ກຳມະການສະພາບໍລິຫານ ທັງເປັນຜູ້ອຳນວຍການໃຫຍ່ LCTC
3. ທ່ານ ຄຳບິນ ໄຊເລົ່າວົງ ກຳມະການສະພາບໍລິຫານ LCTC, ຮອງຜູ້ອຳນວຍການໃຫຍ່ DAI
4. ທ່ານ ຈ່າງ ຈິ່ງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນ LCTC
5. ທ່ານ ສິນທະນຸ ສົມຟອງບຸດຕະຂັນ ກຳມະການສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່ LCTC
6. ທ່ານ ວິຄຳແດງ ອິນທະໄຊ ກຳມະການສະພາບໍລິຫານ ອິດສະຫຼະ LCTC,
7. ທ່ານ ນາງ ວັນນະພອນ ສຸນັນທາ ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ
8. ທ່ານ ນາງ ວັງອຸໄທ ມູລຣັຕນ ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ
9. ທ່ານ ອັດສະວິນ ຂັນທະວົງ ວິຊາການ ພະແນກຈົດທະບຽນ ແລະ ເປີດເຜີຍຂໍ້ມູນ ຕລຊລ
10. ທ່ານ ນາງ ຄຳມີ ພົມສີຄຳລາ ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ແຕ່ລະວາລະຢ່າງເປັນທາງການ ເຊິ່ງກອງປະຊຸມຄັ້ງນີ້ ມີທັງໝົດ 04 ວາລະ, ແຕ່ລະວາລະໄດ້ພິຈາລະນາ, ມີຄຳເຫັນ ແລະ ລົງຄະແນນສຽງ ດັ່ງນີ້:

ວາລະທີ່ 01 : ກ່ຽວກັບການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນ

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານ ໄດ້ລາຍງານກ່ຽວກັບການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດດັ່ງນີ້:

ອີງຕາມແຈ້ງການຂອງ ຕລຊລ ເລກທີ 652/ຕລຊລ ລົງວັນທີ 07/05/2025, ໄລຍະການຈັດຕັ້ງປະຕິບັດແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ພາຍໃນ 3 ປີ (ນັບຈາກວັນທີ 29/04/2022 - 29/04/2025) ແມ່ນໄດ້ສິ້ນສຸດແລ້ວ, ນອກຈາກນັ້ນ, ອີງຕາມເອກະສານລາຍງານການເງິນປະຈຳປີ

2024 ຂອງບໍລິສັດ ເຫັນວ່າຍັງບໍ່ມີການເຄື່ອນໄຫວທຸລະກິດຕົ້ນຕໍ ແລະ ຂາດທຶນຈາກການເຄື່ອນໄຫວທຸລະກິດປີ 2024, ສະນັ້ນ, ຕລຊລ ສະເໜີໃຫ້ບໍລິສັດແຈ້ງເຈດຈຳນົງກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນ ພ້ອມທັງແຜນການເຄື່ອນໄຫວທຸລະກິດ 3 ປີຕໍ່ໜ້າ.

ວາລະດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາບໍລິຫານສາມັນ ໃນວັນທີ 24 ຕຸລາ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 28.059.000 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ່ 02 : ແຜນການດຳເນີນທຸລະກິດປີ 2026 - 2028 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ

ທ່ານ ຈ່າງ ຈິ່ງຫົວ ກຳມະການສະພາບໍລິຫານ ທັງເປັນຫົວໜ້າຝ່າຍການເງິນ ໄດ້ລາຍງານແຜນການດຳເນີນທຸລະກິດປີ 2026 - 2028 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດຢູ່ໃນເອກະສານຄັດຕິດ 03 ຂອງເອກະສານກ່ຽວກັບກອງປະຊຸມ.

ວາລະດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາບໍລິຫານສາມັນ ໃນວັນທີ 24 ຕຸລາ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້.

ທ່ານ ທອງປົນ ກິ່ງຄຳເພັດ ຕາງໜ້າຜູ້ຖືຮຸ້ນ ປະກອບຄຳເຫັນວ່າ: ໂດຍພື້ນຖານແມ່ນເຫັນດີຕໍ່ແຜນການດຳເນີນທຸລະກິດດັ່ງກ່າວ ແຕ່ສະເໜີໃຫ້ຫົວໜ້າຝ່າຍການເງິນທວນຄືນການຄາດຄະເນການເງິນ ໂດຍສະເພາະແມ່ນລາຍຮັບ ແລະ ກຳໄລ ຂອງແຕ່ລະໂຄງການ ໃຫ້ໂຕເລກຖືກຕ້ອງ ແລະເໝາະກັບຕົວຈິງຕື່ມອີກ.

ທ່ານ ຈ່າງ ຈິ່ງຫົວ ຫົວໜ້າຝ່າຍການເງິນຕອບວ່າ: ເຫັນດີຈະທວນຄືນການຄາດຄະເນການເງິນຂອງແຕ່ລະໂຄງການ ດັດແກ້ໃຫ້ໝາະກັບຕົວຈິງ ແລະຈະເອົາແຜນດັ່ງກ່າວມອບໃຫ້ສະພາບໍລິຫານດັດແກ້ຕາມຄວາມເໝາະສົມຕື່ມ.

ຈາກນັ້ນບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມອີກ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 28.059.000 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ່ 03 : ກ່ຽວກັບການປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດ

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານ ໄດ້ລາຍກ່ຽວກັບການປ່ຽນຜູ້ອຳນວຍການໃຫຍ່

ຂອງບໍລິສັດ ຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດດັ່ງນີ້:

1. ອີງຕາມຄວາມຕ້ອງການຂອງການດຳເນີນທຸລະກິດ ແລະ ການພັດທະນາຂອງບໍລິສັດ ທ່ານ ຕິ່ງ ຢູ້ ຕິ່ງຈະຍົກຍ້າຍຄືນກັບປະເທດຈີນ ແລະ ບໍ່ສາມາດສືບຕໍ່ດຳລົງຕຳແໜ່ງເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດໄດ້, ສະນັ້ນ, ຈະຍົກເລີກ ທ່ານ ຕິ່ງ ຢູ້ຕິ່ງ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ

2. ຮັບຈ້າງທ່ານ ຫຼີວ ຮ້າວ ເປັນຜູ້ອຳນວຍການໃຫຍ່ຜູ້ໃໝ່ຂອງບໍລິສັດ.

ວາລະດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາບໍລິຫານສາມັນ ໃນວັນທີ 24 ຕຸລາ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຕໍ່ຂໍ້ສະເໜີພິຈາລະນານີ້ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 28.059.000 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ່ 04 : ກ່ຽວກັບການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ

ທ່ານ ວັນທອງ ສິດທິກຸນ ຮອງປະທານສະພາບໍລິຫານ ໄດ້ລາຍງານກ່ຽວກັບການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດຕໍ່ກອງປະຊຸມ ເຊິ່ງມີເນື້ອໃນລະອຽດດັ່ງນີ້:

1. ອີງຕາມຄວາມຕ້ອງການຂອງການດຳເນີນທຸລະກິດ ແລະ ການພັດທະນາຂອງບໍລິສັດ ຈະຍົກເລີກ ທ່ານ ຫວັງ ຮຸ່ຍ ເປັນກຳມະການສະພາບໍລິຫານຂອງບໍລິສັດ ແລະ ຈະແຕ່ງຕັ້ງ ທ່ານ ຫຼີວ ຮ້າວ ເປັນກຳມະການສະພາບໍລິຫານຂອງບໍລິສັດ.

2. ຈະຍົກເລີກທ່ານ ຕິ່ງ ຢູ້ຕິ່ງ ເປັນກຳມະການສະພາບໍລິຫານຂອງບໍລິສັດ ແລະ ຈະແຕ່ງຕັ້ງ ທ່ານ ຕິ່ງ ເຈີ້ນຊູ້ ເປັນກຳມະການສະພາບໍລິຫານຜູ້ໃໝ່ຂອງບໍລິສັດ.

3. ຈະຍົກເລີກທ່ານ ຫຼີວ ຮ້າວ ເປັນກຳມະການສະພາບໍລິຫານອິດສະລະຂອງບໍລິສັດ ແລະ ຈະແຕ່ງຕັ້ງທ່ານ ຫຼີວ ເຫວີນຈູ້ ເປັນກຳມະການສະພາບໍລິຫານອິດສະລະຜູ້ໃຫຍ່ຂອງບໍລິສັດ.

ວາລະດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາບໍລິຫານສາມັນ ໃນວັນທີ

24 ກໍລາ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນຄໍ້ສະເໜີພິຈາລະນາປຶ ເຊິ່ງບໍ່ມີຄຳເຫັນ ແລະ ຄຳຖາມໃດຈາກກອງປະຊຸມ.

ຜ່ານການພິຈາລະນາ ແລະ ການລົງຄະແນນສຽງ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ:

- ເຫັນດີຈຳນວນ 28.059.000 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຈາກນັ້ນ, ທ່ານ ສິນທະນຸ ສົມພອງບຸດາຣະຍັນ ຜູ້ຄວບຄຸມລະແນນສຽງ ໄດ້ນັບກວດຜົນການລົງ ຄະແນນສຽງ ແລະ ແຈ້ງຜົນການລົງຄະແນນສຽງຂອງແຕ່ລະຂໍ້ພິຈາລະນາຕໍ່ກອງປະຊຸມ.

ສຸດທ້າຍ, ປະທານກອງປະຊຸມໄດ້ສະຫຼຸບວ່າ : ທັງໝົດ 04 ວາລະໃນກອງປະຊຸມຄັ້ງນີ້ແມ່ນຜ່ານໄປ ດ້ວຍຜົນສຳເລັດອັນຈົບງາມ, ພ້ອມກັນນັ້ນ, ໄດ້ກ່າວປິດກອງປະຊຸມໃນເວລາ 11:45 ໂມງຂອງວັນດຽວ ກັນ.

ປະທານກອງປະຊຸມ

ອັນທອງ ສິດທິກຸນ

ຜູ້ບັນທຶກ

ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2025

ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

I. ສະພາບການດຳເນີນທຸລະກິດ ປະຈຳປີ 2025

1. ໂຄງການກໍ່ສ້າງອາຄານທ່ອງທ່ຽວ ແລະ ວັດທະນະທຳ

ອາຄານທ່ອງທ່ຽວ ແລະ ວັດທະນະທຳ ເປັນຕຶກທີ່ໄດ້ກວມເອົາໂຮງແຮມ, ຄອນໂດ ແລະ ຫ້ອງການຢູ່ຕຶກດຽວກັນ ແລະ ເປັນສຳນັກງານໃຫຍ່ສຳລັບບໍລິສັດ, ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂພນະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໄດ້ຈັດພິທີວາງສິລາລຶກໃນວັນທີ 25/04/2023 ແລະ ເລີ່ມກໍ່ສ້າງຮາກຖານແຕ່ເດືອນ 5 ມາຮອດເດືອນ 10 ປີ 2025 ໄດ້ສຳເລັດໂຄງສ້າງຕຶກໂຕສຳຄັນ, ຄາດວ່າຈະສຳເລັດການກວດຮັບໂຄງການ ແລະ ເປີດນຳໃຊ້ຢ່າງເປັນທາງການໃນປີ 2026.

2. ໂຄງການກໍ່ສ້າງເຂດສາທິດເສດຖະກິດອຸດສາຫະກຳ ການທ່ອງທ່ຽວ ວັດທະນະທຳ ວັງ ວຽງ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານຂັນໝາກ ເມືອງວັງວຽງ ແຂວງວຽງຈັນ ກວມເອົາເຂດພື້ນທີ່ໂຮງງານຊີມັງວັງວຽງ ຫຼັງ 1 ແລະ ຫຼັງ 2, ໄດ້ຈັດພິທີວາງສິລາລຶກໃນວັນທີ 12/01/2024, ແຜນການລວມ, ບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມໄດ້ຂອງໂຄງການແຫ່ງນີ້ໄດ້ຮັບຮອງຜ່ານກະຊວງວັດທະນະທຳ ແລະ ທ່ອງທ່ຽວ ແລະ ແຂວງວຽງຈັນ, ກຳລັງເລັ່ງເອກະສານກ່ຽວກັບສິດນຳໃຊ້ທີ່ດິນ.

3. ໂຄງການກໍ່ສ້າງເຂດຣີສອດສາກົນ ໜອງສີຟ້າດອງຈັນ ວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ)

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂພນຊ ເມືອງວັງວຽງ ແຂວງວຽງຈັນ ກວມເນື້ອທີ່ປະມານ 24 ເຮັກຕາ ແລະ ໄດ້ຈັດພິທີວາງສິລາລຶກໃນວັນທີ 12/01/2024 ຄືກັນ, ປີ 2025 ໄດ້ເລີ່ມກໍ່ສ້າງເບື້ອງຕົ້ນ ເຊັ່ນ ລະບົບໄຟຟ້າ, ລະບົບນ້ຳ ແລະ ສ້ອມແປງເສັ້ນທາງຕ່າງໆ.

4. ໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂນນຂີ້ເຫຼັກ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ເປັນກຸ່ມສິ່ງປຸກສ້າງທີ່ໄດ້ກວເອົາການຄ້າ, ທີ່ພັກ, ໂຮງແຮມ ແລະ ຫ້ອງການຢູ່ເຂດດຽວກັນ, ໄດ້ຈັດພິທີວາງສິລາລຶກໃນວັນທີ 04/04/2024, ໂຄງການນີ້ຈະແບ່ງວຽກງານການກໍ່ສ້າງເປັນໄລຍະ ປີ 2025 ໄດ້ກໍ່ສ້າງໄລຍະທີ 1 ແລະ ນຳໃຊ້ໄດ້.

5. ໂຄງການກໍ່ສ້າງຕຶກຫໍພັກຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂນນສະຫວ່າງ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ກວມເນື້ອທີ່ 2000 ຕາແມັດ ເປັນຕຶກ 3 ຊັ້ນ ມີຫ້ອງນອນທັງໝົດ 14 ຫ້ອງ, ໄດ້ສຳເລັດການກໍ່ສ້າງໂຄງສ້າງຕຶກປະມານ 25% ຄາດວ່າຈະສຳເລັດການກໍ່ສ້າງພາຍໃນປີນີ້.

6. ໂຄງການກໍ່ສ້າງພະພຸດທະຮູບຢູ່ຈອມພູຜາບິ່ວ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ຈອມພູຜາບິ່ວ ບ້ານນາຄູນ ເມືອງວັງວຽງ ແຂວງວຽງຈັນ ຫ່າງຈາກເຂດ ສາທິດເສດຖະກິດອຸດສາຫະກຳ ການທ່ອງທ່ຽວ ວັດທະນະທຳ ວັງວຽງ ປະມານ 12 ກິໂລແມັດ, ແຜນການອອກແບບຈິດສຳນຶກສຳລັບໂຄງການດັ່ງກ່າວໄດ້ສຳເລັດແລ້ວ. ການສ້າງຕັ້ງມູນນິທິພະພຸດທະຮູບ ພູຜາບິ່ວໄດ້ຮັບການອະນຸມັດຈາກພາກສ່ວນກ່ຽວຂ້ອງແລ້ວ ເຊິ່ງໄດ້ສະໜອງເງິນທຶນໃຫ້ແກ່ການກໍ່ສ້າງ ໂຄງການ. ປີ 2025 ໄດ້ສຳເລັດວຽກງານການສຳຫຼວດ, ເດືອນ 1 ປີ 2026 ໄດ້ເລີ່ມການກໍ່ສ້າງເສັ້ນທາງ ຄາດວ່າຈະສຳເລັດໃນວັນທີ 15/04/2026. ຕາມທີ່ໄດ້ປຶກສາກັບສະມາຄົມສາສະໜາພຸດ ຈະກຳນົດເອົາ ວັນທີ 08/08/2026ເປັນມື້ຈັດພິທີວາງສີລາລຶກຂອງໂຄງການນີ້.

7. ໂຄງການກໍ່ສ້າງອາຄານຮູບເງົ່າ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານເກົ້າຍອດ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ເນື້ອທີ່ທັງໝົດ 3050 ຕາແມັດ ເປັນໂຄງການພັດທະນາທີ່ດິນທີ່ຈະຮ່ວມມືກັບກົມຮູບເງົ່າ ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ໄດ້ສຳເລັດສ້າງແຜນການອອກແບບ ແລະ ສັນຍາການຮ່ວມມືພ້ອມຍື່ນ ໃຫ້ກະຊວງວັດທະນະທຳ ແລະ ທ່ອງທ່ຽວ ເພື່ອພິຈາລະນາ.

8. ໂຄງການພັດທະນາທີ່ດິນທີ່ຮ່ວມມືກັບສູນກາງແມ່ລາວສ້າງຊາດ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານຊຽງຍືນ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ເປັນໂຄງການ ພັດທະນາທີ່ດິນທີ່ຈະຮ່ວມມືກັບສູນກາງແມ່ລາວສ້າງຊາດ, ໄດ້ສຳເລັດສ້າງແຜນການອອກພ້ອມຍື່ນໃຫ້ ພາກສ່ວນທີ່ກ່ຽວຂ້ອງເພື່ອພິຈາລະນາ, ທາງບໍລິສັດກັບສູນກາງແມ່ລາວສ້າງຊາດໄດ້ເຊັນບົດບັນທຶກ ຄວາມເຂົ້າໃຈການຮ່ວມມືໃນວັນທີ 11/03/2025.

9. ວຽກງານດ້ານບໍ່ແຮ່

ວັນທີ 03/06/2024 ທາງບໍລິສັດໄດ້ເຊັນສັນຍາການຮ່ວມມືພັດທະນາດ້ານຂົງເຂດບໍ່ແຮ່ຢູ່ແຂວງ ຫົວພັນ ກັບບໍລິສັດ ລັດພັດທະນາຊົນນະບົດ ກະຊວງປ້ອງກັນປະເທດ, ຫຼັງຈາກນັ້ນ ໄດ້ຍື່ນເອກະສານສະເໜີຂໍນຳລັດຖະບານຕາມຂັ້ນຕອນ, ຮອດປັດຈຸບັນນີ້, ກຳລັງລໍຖ້າລັດຖະບານເຊັນສັນຍາສຳປະທານກັບກະ ຊວງປ້ອງກັນປະເທດ, ນອກຈາກນີ້, ທັງສອງຝ່າຍເຫັນດີຈະຮ່ວມມືກັນພັດທະນາທີ່ດິນຂອງບໍລິສັດ ລັດ ພັດທະນາຊົນນະບົດ ເພື່ອປຸກຕຶກໃໝ່ ສ່ວນແຜນການອອກແບບຂອງໂຄງການ ແລະ ວຽກການສຳຫຼວດ ໄດ້ສຳເລັດແລ້ວ ວາງແຜນຈະເລີ່ມການກໍ່ສ້າງໃນປີ 2026.

10. ການຮ່ວມມືຢ່າງຮອບດ້ານກັບກະຊວງ ວັດທະນະທຳ ແລະ ທ່ອງທ່ຽວ

ປີ 2025 ໄດ້ສະເໜີນຳກະຊວງ ວທ ເພື່ອໃຫ້ບໍລິສັດລູກ ຄື ບໍລິສັດ ສະຖາບັນແຜນການ ແລະ ການ ອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ ມີສ່ວນຮ່ວມໃນວຽກການວາງແຜນ, ອອກແບບ, ໂຄສະນາ, ກໍ່ສ້າງ, ດຳເນີນງານຕໍ່ແຫຼ່ງທ່ອງທ່ຽວຕ່າງໆທີ່ຈົດທະບຽນໃນບັນຊີຂອງກະຊວງ ວທ, ຮ່ວມມືກັນກັບພາກສ່ວນທີ່ກ່ຽວຂ້ອງຂອງກະຊວງ ວທ ສ້າງແຫຼ່ງທ່ອງທ່ຽວຕ່າງໆໃຫ້ກາຍເປັນແຫຼ່ງທ່ອງທ່ຽວທັນ ສະໄໝທີ່ມີສິ່ງອຳນວຍຄວາມສະດວກຄົບຖ້ວນ, ສົມບຸນ, ໄດ້ມາດຖະຖານ, ມີຄວາມປອດໄພ ແລະ ມີ ຄວາມເໝາະສົມໃນການທ່ອງທ່ຽວ ເຊິ່ງການສະເໜີດັ່ງກ່າວໄດ້ຮັບການເຫັນດີເປັນພື້ນຖານແລ້ວ, ທາງ ບໍລິສັດກໍໄດ້ກຽມແຜນວຽກ, ງົບປະມານ ແລະ ບຸກຄະລາກອນລະອຽດພ້ອມແລ້ວ ເພື່ອເຂົ້າຮ່ວມກອງ ປະຊຸມປຶກສາຫາລືທີ່ຈັດໂດຍພາກສ່ວນທີ່ກ່ຽວຂ້ອງຂອງກະຊວງ ວທ. ນອກຈາກນີ້, ທາງບໍລິສັດຍັງສະເ ໜີຂໍຮ່ວມກັນສ້າງ " ສູນຄຸ້ມຄອງ ແລະ ບໍລິການການທ່ອງທ່ຽວ ເມືອງວັງວຽງ " ໜັງສືສະເໜີກັບເອ ກະສານກ່ຽວຂ້ອງໄດ້ຍື່ນໃຫ້ກະຊວງ ວທ ແລ້ວ.

II. ແຜນວຽກງານປະຈຳປີ 2026

ນອກຈາກຈະສືບຕໍ່ດຳເນີນໂຄງການທີ່ສະຫຼຸບຂ້າງເທິງໃຫ້ປະສົບຜົນສຳເລັດຕາມແຜນທີ່ວາງໄວ້, ພ້ອມກັນນັ້ນ, ທາງບໍລິສັດຈະຕັ້ງໜ້າກະກຽມຟື້ນຟູການຊື້ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບຄືນໃໝ່.

III. ສະພາບການເງິນ

ລາຍລະອຽດແມ່ນຢູ່ໃນບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025.

IV. ສະພາບການເປີດກອງປະຊຸມຜູ້ຖືຮຸ້ນ ແລະ ສະພາບໍລິຫານ

ຮອດວັນທີ 31/12/2025 ບໍລິສັດໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ, ກອງປະຊຸມວິສາມັນຜູ້ຖືຮຸ້ນ 1 ຄັ້ງ, ກອງປະຊຸມສາມັນສະພາບໍລິຫານ 2 ຄັ້ງ ແລະ ກອງປະຊຸມວິສາມັນສະພາບໍລິຫານ 7 ຄັ້ງ ໄດ້ພິຈາລະນາ ແລະ ຮັບຮອງ ຂໍ້ສະເໜີພິຈາລະນາສຳຄັນຕ່າງໆຄືດັ່ງນີ້:

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ ຊີມັງລາວ ມະຫາຊົນ;

ບົດດຳເນີນທຸລະກິດ ປະຈຳປີ 2024 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ;

ບົດລາຍງານການເງິນປະຈຳປີ 2024 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ;

ບົດລາຍງານການເງິນ ປະຈຳປີ 2023 ຂອງບໍລິສັດ ຊີມັງລາວ ມະຫາຊົນ;

ກ່ຽວກັບການວ່າຈ້າງຜູ້ອຳນວຍການໃຫຍ່ ແລະ ການປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ;

ກ່ຽວກັບການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ;

ກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ;

ກ່ຽວກັບການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນ;

ແຜນການດຳເນີນທຸລະກິດປີ 2026 - 2028 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ

ກ່ຽວກັບກາປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດ;

ກ່ຽວກັບການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ;

ກ່ຽວກັບການຂຶ້ນທະບຽນຜູ້ໃໝ່ຂອງຜູ້ສ້າງຕັ້ງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ;

ກ່ຽວກັບການເອົາຊັ້ນ 1 - 3 ຂອງອາຄານວັດທະນະທຳ-ທ່ອງທ່ຽວເປັນຊັບສິນຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນເພື່ອນຳໃຊ້ເປັນຫ້ອງການ,

ກ່ຽວກັບການປ່ຽນຊື່ຂອງບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ;

ບົດລາຍງານການເງິນ 6 ເດືອນຕົ້ນປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ;

ບົດລາຍງານສະພາບການດຳເນີນທຸລະກິດ 6 ເດືອນຕົ້ນປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດ ທະນະທຳລາວ ມະຫາຊົນ;

ກ່ຽວກັບການປ່ຽນຂາຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ;

ກ່ຽວກັບການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນຂອງບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ

V.ຂໍ້ມູນພື້ນຖານສຳລັບຄະນະກຳມະການສະພາບໍລິຫານ ແລະ ພະນັກງານ

ຄະນະກຳມະການສະພາບໍລິຫານຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ປະກອບ ມີ 11 ທ່ານ, ຝ່າຍ ລາວ 4 ທ່ານ (ກຳມະການສະພາບໍລິຫານອິດສະຫຼະ 1 ທ່ານ), ຝ່າຍຈີນ 7 ທ່ານ (ກຳມະການສະພາບໍລິຫານອິດສະຫຼະ 2 ທ່ານ).

ຈົນຮອດວັນທີ 31/12/2025 ພະນັກງານຖາວອນຂອງບໍລິສັດມີຈຳນວນ 44 ຄົນ.

ຄະນະກຳມະການສະພາບໍລິຫານມີຂໍ້ມູນລະອຽດດັ່ງນີ້:

	ທ່ານ ເນ້ຍ ເຫຼີຍ 11/12/1971	ສັນຊາດ ຈີນ	ປະທານສະພາບໍລິຫານ
	ທ່ານ ວັນທອງ ສິດທິກຸນ 02/03/1960	ສັນຊາດລາວ	ຮອງປະທານສະພາບໍລິຫານ
	ທ່ານ ຫຼີ ຮ້າວ 01/12/1977	ສັນຊາດຈີນ	ກຳມະການສະພາບໍລິຫານ ຜູ້ອຳນວຍການໃຫຍ່
	ທ່ານ ຄຳບົນ ໄຊເລົ່າວົງ 15/02/1958	ສັນຊາດລາວ	ກຳມະການສະພາບໍລິຫານ ຮອງຜູ້ອຳນວຍການໃຫຍ່
	ທ່ານ ຈ່າງ ຈິ່ງຫົວ 26/11/1978	ສັນຊາດຈີນ	ກຳມະການສະພາບໍລິຫານ ຫົວໜ້າຝ່າຍການເງິນ
	ທ່ານ ສີນທະນູ ສົມຟອງບຸດຕະຂັນ 20/07/1971	ສັນຊາດລາວ	ກຳມະການສະພາບໍລິຫານ ຮອງຜູ້ອຳນວຍການໃຫຍ່
	ທ່ານ ນາງ ຊ້າຍ ລີງລີງ 10/10/1949	ສັນຊາດຈີນ	ກຳມະການສະພາບໍລິຫານ

	ທ່ານ ຕິ໋ງ ເຈີ້ນຊູ້ 18/11/1973	ສັນຊາດຈີນ	ກຳມະການສະພາບໍລິຫານ
	ທ່ານ ໄຕ້ ຢອງຫົວ 3/7/1973	ສັນຊາດຈີນ	ກຳມະການສະພາບໍລິຫານ ອິດສະຫຼະ
	ທ່ານ ຫຼີ ເວີນຈູ້ 11/1973	ສັນຊາດຈີນ	ກຳມະການສະພາບໍລິຫານ ອິດສະຫຼະ
	ທ່ານ ວິຄຳແດງ ອິນທະໄຊ 15/08/1980	ສັນຊາດລາວ	ກຳມະການສະພາບໍລິຫານ ອິດສະຫຼະ

VI. ແຜນການປັນຜົນ

ເນື່ອງຈາກວ່າ ບໍລິສັດຍັງນອນຢູ່ໃນໄລຍະເວລາປັບປຸງຟື້ນຟູ ແລະ ຫັນຮູບແບບທຸລະກິດ ບໍ່ທັນມີກຳໄລສາມາດປັນຜົນໃຫ້ແກ່ບັນດາຜູ້ຖືຮຸ້ນ, ສະນັ້ນ, ຈຶ່ງບໍ່ມີແຜນການປັນຜົນສຳລັບ ປີ 2025.

VII. ວຽກງານສຳຄັນຕ່າງໆອື່ນ

1. ຄະດີການຮ້ອງຟ້ອງ

ຮອດວັນທີ 31/12/2025, ບໍ່ມີເກີດຄະດີການຮ້ອງຟ້ອງ.

2. ການລົງໂທດຕໍ່ຜູ້ບໍລິຫານຂັ້ນສູງຈາກພາກສ່ວນກ່ຽວຂ້ອງກັບການກວດກາຕິດຕາມ

ຮອດວັນທີ 31/12/2025, ບໍ່ມີການລົງໂທດຕໍ່ຜູ້ບໍລິຫານຂັ້ນສູງຈາກພາກສ່ວນກ່ຽວຂ້ອງກັບການກວດກາຕິດຕາມ.

3. ການປ່ຽນແປງຂອງຜູ້ຖືຮຸ້ນລາຍໃຫຍ່ ແລະ ຜູ້ອຳນວຍການໃຫຍ່:

ອີງຕາມມະຕິກອງປະຊຸມສາມັນສະພາບໍລິຫານສະໄໝທີ 10 ຄັ້ງທີ 6 ປີ 2025 ຂອງບໍລິສັດ ໄດ້ແຕ່ງຕັ້ງ ທ່ານ ຫຼີ ຮ້າວ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ.

4. ການຊື້ຮຸ້ນຂອງບໍລິສັດອື່ນ, ການຂາຍຊັບສິນຂອງບໍລິສັດ

- ອີງຕາມມະຕິກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 6 ປະຈຳປີ 2025 ຂອງບໍລິສັດ ເຫັນດີໂອນຮຸ້ນທັງໝົດທີ່ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຖືຢູ່ໃນບໍລິສັດ ຟາສະຕາ ໂຕແບກ ໂຄ ການຄ້າ ຈຳກັດ ໃຫ້ແກ່ທ່ານ ໂຈວ ຊຸ້ນໂກວ (Mr ZhouXunguo).
- ອີງຕາມມະຕິກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 7 ປະຈຳປີ 2025 ຂອງບໍລິສັດ ເຫັນດີ ບໍລິສັດ ລາວ ຟານຊິງທີ່ປຶກສາ ແລະ ຄຸ້ມຄອງການລົງທຶນ ຈຳກັດຜູ້ດຽວ ເພີ່ມທຶນຈົດທະບຽນໃຫ້ແກ່ ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ ໃນຈຳນວນ

1.921.600.000,00 ກີບ.

5. ການຄ້າຂາຍມີມູນຄ່າສູງທີ່ກ່ຽວຂ້ອງພັນເຖິງບໍລິສັດ

ຮອດວັນທີ 31/12/2025, ບໍ່ມີການຄ້າຂາຍມີມູນຄ່າສູງທີ່ກ່ຽວຂ້ອງພັນເຖິງບໍລິສັດ.

6. ສະພາບການອິດສະຫຼະພາບຂອງບໍລິສັດແມ່

ມີຄວາມອິດສະຫຼະດ້ານບຸກຄະລາກອນ, ດ້ານຊັບສິນ, ດ້ານບັນຊີການເງິນ, ດ້ານກິດຈະການ ແລະ ດ້ານອົງການຈັດຕັ້ງ.

7. ການຮັບຈ້າງບໍລິສັດກວດສອບ:

ໄດ້ສືບຕໍ່ໃຊ້ບໍລິການຂອງບໍລິສັດກວດສອບເດີມໃນປີ 2025 ບໍ່ມີການປ່ຽນແປງ.

8. ການເຊັນສັນຍາທີ່ສຳຄັນ ແລະ ການຄ້ຳປະກັນ

- ໄດ້ເຊັນສັນຍາກວດກາເຕັກນິກການກໍ່ສ້າງ, ສັນຍາຄຸ້ມຄອງມູນຄ່າກໍ່ສ້າງ ສຳລັບໂຄງການກໍ່ສ້າງພະ ຜຸດທະຮູບພູຜາບ໋ວຢັ້ງຢືງກັບບໍລິສັດ ລາວ ຟານຊິ່ງທີ່ປຶກສາ ແລະ ຄຸ້ມຄອງການລົງທຶນ ຈຳກັດຜູ້ດຽວ ໃນ ວັນທີ 01/11/2025.

- ຈົນຮອດວັນທີ 31/12/2025 ບໍ່ມີການຄ້ຳປະກັນໃດໜຶ່ງ.

ບົດລາຍງານການດຳເນີນທຸລະກິດປະຈຳປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໄດ້ສິ້ນສຸດລົງພຽງເທົ່ານີ້ ເຊິ່ງບົດດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມ ສາມັນສະພາບໍລິຫານສະໄໝທີ 10 ຄັ້ງທີ 7 ປີ 2026 ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນຄັ້ງນີ້ເພື່ອພິຈາລະນາ ແລະ ຮັບຮອງ.

ເອກະສານຕິດຄັດ 05

ບົດລາຍງານວຽກງານການເງິນປະຈຳປີ 2025
ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

I. ຄຳອະທິບາຍບົດລາຍງານ

ປີ 2025 ແມ່ນໄລຍະສຳຄັນສຳລັບການຫັນປ່ຽນຮູບແບບທຸລະກິດຂອງບໍລິສັດ, ສຸມໃສ່ການຈັດຕັ້ງປະຕິບັດວຽກງານການເງິນທີ່ໄດ້ກຳນົດໄວ້ຂອງປີ 2025, ການຊຸກຍູ້ກໍ່ສ້າງໂຄງການສຳຄັນ, ການຄຸ້ມຄອງການກວດສອບຊັບສິນ, ການວາງແຜນເປັນເອກະພາບຕໍ່ເງິນທຶນ ແລະວຽກງານອື່ນໆ ເຊິ່ງໄດ້ສ້າງພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດບັນດາໂຄງການທີ່ຈະສ້າງລາຍຮັບໃນປີ 2026-2028. ໃນບົດລາຍງານນີ້, ຂໍ້ມູນການເງິນຫຼັກຂອງປີ 2025 ໄດ້ນຳໃຊ້ຂອບເຂດ ແລະ ມາດຕະຖານຂໍ້ມູນເດີມໂດຍບໍ່ມີການປ່ຽນແປງ, ວຽກງານການເງິນຂອງປີ 2025 ແມ່ນເອົາການດຳເນີນໂຄງການ, ການຄຸ້ມຄອງເງິນທຶນ, ການສ້າງລະບົບເປັນໃຈກາງ, ບໍ່ມີການເພີ່ມເຕີມໃໝ່ສຳລັບຂໍ້ມູນການເງິນສຳຄັນ, ຜົນການດຳເນີນທຸລະກິດຕົວຈິງຈະປະກົດເຫັນເທື່ອລະກ້າວຕາມການປະຕິບັດໂຄງການໃຫ້ປະກົດຜົນເປັນຈິງ.

II. ຂໍ້ມູນການເງິນຫຼັກຂອງປີ 2025

ປີ 2025 ບໍລິສັດຢູ່ໃນໄລຍະຂ້າມຜ່ານລະຫວ່າງທຸລະກິດເກົ່າແລະໃໝ່ ບໍ່ມີລາຍໄດ້ຈາກທຸລະກິດຫຼັກ, ໄດ້ສຸມໃສ່ການຈັດວາງຂະແໜງການອັດທະນະທຳ ທ່ອງທ່ຽວ ແລະ ການເຊື່ອມໂຍງຊັບພະຍາກອນ, ສຳເລັດວຽກງານການກະກຽມເປື້ອງຕົ້ນຂອງບັນດາໂຄງການສຳຄັນ, ຍ້ອນມີຜົນກະທົບຈາກປັດໄຈຕ່າງໆ ເຊັ່ນ: ການລົງທຶນໂຄງການ, ການຄິດໄລ່ຄ່າສູນເສຍມູນຄ່າຊັບສິນ ແລະອື່ນໆ ຈຶ່ງເຮັດໃຫ້ເກີດການຂາດທຶນໃນການດຳເນີນທຸລະກິດ, ຂໍ້ມູນການເງິນຫຼັກມີດັ່ງນີ້:

1. ສາພາບການຂາດທຶນ ແລະ ກຳໄລ

ໃນປີ 2025, ບໍລິສັດມີການຂາດທຶນ 25.304.161.494 ກີບ ຫຼັງຈາກລວມກິດຈະການແລ້ວ, ໃນນັ້ນ: ບໍລິສັດແມ່ຂາດທຶນ 23.271.078.181 ກີບ ແລະ ບໍລິສັດລູກຂາດທຶນທັງໝົດ 2.033.083.313 ກີບ. ຈຳນວນເງິນການຂາດທຶນຂອງ ປີ 2025 ຫຼາຍກວ່າປີ 2024 ຍ້ອນວ່າປີ 2024 ມີລາບໄດ້ຈາກການສະສາງຊັບສິນຄົນທີ່ຂອງບໍລິສັດ.

(1) ລາຍໄດ້

ລາຍໄດ້ຈາກການດຳເນີນທຸລະກິດ: 511.963.836,28 ກີບ, ໃນນັ້ນ, ມີລາບໄດ້ຈາກການສະສາງຊັບສິນຄົນທີ່ 478.713.676 ກີບ;

(2) ຄ່າໃຊ້ຈ່າຍຕົ້ນທຶນ

- ຕົ້ນທຶນທຸລະກິດອື່ນໆ: 1.694.832.102,30 ກີບ, ສ່ວນໃຫຍ່ແມ່ນຄ່າໃຊ້ຈ່າຍອັດຖຸດິບ;
- ຕົ້ນທຶນການບໍລິຫານ: 16.278.168.939,31 ກີບ, ເປັນຕົ້ນແມ່ນເງິນເດືອນພະນັກງານ 10.214.736.340 ກີບ, ເງິນອຸດໜູນອອກການພະນັກງານ 669.010.657, ຄ່າໃຊ້ຈ່າຍສາທາລະນະສຳພັນແລະການຮັບແຂກ 976.202.859,72 ກີບ,ຄ່າໃຊ້ຈ່າຍຫ້ອງການປະຈຳວັນ 772.921.788,81 ກີບ; ຄ່າໃຊ້ຈ່າຍການນຳໃຊ້ລົດ 603.620.422 ກີບ, ຄ່າກວດສອບ 829.617.250 ກີບ, ຄ່າຈ້າງ ບໍລິສັດເຮັກບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ 709.318.500 ກີບ.
- ຄ່າໃຊ້ຈ່າຍການດຳເນີນທຸລະກິດອື່ນ: 2.787.749.803 ກີບ, ທັງໝົດແມ່ນຫັກຄ່າສູນເສຍການຫຼຸດລາຄາເຄື່ອງໃນສາງ.
- ຄ່າໃຊ້ຈ່າຍທາງການເງິນ: 2.613.020.008,18 ກີບ, ຄ່າດອກເບ້ຍ 1.258.272.210,26, ຄ່າສູນເສຍຈາກການແລກປ່ຽນເງິນຕາ 1.339.039.387,3 ກີບ.

2. ສະພາບການຊັບສິນ ແລະ ໜີ້ສິນ (ຮອດວັນທີ 31 ທັນວາ 2025)

ມູນຄ່າຊັບສິນລວມຂອງບໍລິສັດ 108.814.997.890 ກີບ, ໜີ້ສິນລວມ 153,550,060,113 ກີບ, ສິດຜົນປະໂຫຍດຂອງຜູ້ເປັນກຳມະສິດ -44.735.062.221 ກີບ, ການຂາດທຶນສະສົມ 109.376.555.872 ກີບ.

(1) ຊັບສິນ

- ຊັບສິນບໍ່ໝຸນວຽນ: 25.041.458.608 ກີບ, ໃນນັ້ນ: ໂຄງການກໍ່ສ້າງທີ່ກຳລັງດຳເນີນການ 19.985.701.067 ກີບ, ຊັບສິນຄົງທີ່ 1.276.390.037 ກີບ, ຊັບສິນບໍ່ມີຕົວຕົນ 3.779.367.504 ກີບ;
- ຊັບສິນໝຸນວຽນ: 83.773.539.282 ກີບ, ໃນນັ້ນ: ເຄື່ອງໃນສາງ 74.687.556.805 ກີບ (ລວມຕົ້ນທຶນການພັດທະນາຄອນໂດ), ຊັບສິນໝຸນວຽນອື່ນໆ 7.206.703.434 ກີບ, ໜີ້ຕ້ອງຮັບ 1.036.021.574 ກີບ ແລະ ເງິນທຶນເປັນເງິນຕາ 788.807.470 ກີບ.

(2) ໜີ້ສິນ

ໜີ້ສິນທັງໝົດແມ່ນໜີ້ສິນໝຸນວຽນ ມີທັງໝົດ 153.550.060.113 ປະກອບມີ: ໜີ້ຕ້ອງສົ່ງອື່ນ 83.897.242.635 ກີບ (ໃນນັ້ນມີໜີ້ຕ້ອງສົ່ງຂາຮຸ້ນລາວບໍລິສັດ DAI 10.219.799.396 ກີບ, ໜີ້ຕ້ອງສົ່ງຂາຮຸ້ນຈີນບໍລິສັດ ຢຸນນານ ເຮີງຊີເຊີນລຸ້ຍ ຈຳກັດ 10.478.978.587,7 ກີບ) ເງິນເດືອນ ພະນັກງານຕ້ອງຈ່າຍ 15.354.513.105 ກີບ, ໜີ້ຕ້ອງສົ່ງພາກສ່ວນທີ່ກ່ຽວຂ້ອງ 12.969.716.098 ກີບ, ເງິນເກັບລ່ວງໜ້າ 25.583.759.134 ກີບ, ໜີ້ຕ້ອງສົ່ງ 6.485.981.670 ກີບ, ໜີ້ຕ້ອງສົ່ງຕາມກົດໝາຍ 9.258.847.470 ກີບ ສ່ວນຫຼາຍແມ່ນພາສີອາກອນຄ້າງຈ່າຍລັດຖະບານ.

3. ສະພາບການດຳເນີນງານທາງດ້ານເງິນທຶນ

(1) ລາຍຮັບ

ໃນປີ 2025, ມີການຊຳລະສະສາງໜີ້ຕ້ອງຮັບ 1.658.026.416 ກີບ (ໃນນັ້ນມີເງິນສົດ 9.000.000 ກີບ); ຮັບເງິນຈາກການສະສາງຊັບສິນ 818.644.545,09 ກີບ, ເງິນຮັບລ່ວງໜ້າຈາກການຂາຍຕຶກເບີ 3 ທີ່ຕັ້ງຢູ່ເກົ້າລ້ຽວ 16.165.875.000 ກີບ, ຢືມເງິນຈາກຄູ່ຮ່ວມມືອາຄານອັດທະນະທຳ-ທ່ອງທ່ຽວ 48.629.552.505,2 ກີບ, ຢືມເງິນຈາກຜູ້ຖືຮຸ້ນ/ບຸກຄົນ 11.657.119.477,2 ກີບ.

(2) ລາຍຈ່າຍ

ຄ່າໂຄງການກໍ່ສ້າງຫໍພັກ 3.686.791.947,06 ກີບ, ຄ່າໂຄງການກໍ່ສ້າງພະຜຸດທະຮູບພູຜາບົວ 423.292.223,25 ກີບ, ຄ່າໂຄງການກໍ່ສ້າງອາຄານອັດທະນະທຳ-ທ່ອງທ່ຽວ 48.629.000.000 ກີບ, ເງິນເດືອນ ແລະ ປະກັນສັງຄົມຂອງພະນັກງານ 7,562,573,400 ກີບ, ເງິນອຸດໜູນຂອງພະນັກງານອອກການ 435.595.500 ກີບ, ສົ່ງຄືນຄ□ຂາຍຄອນໂດ 1.505.830.955,5 ກີບ, ສົ່ງຄືນຄ່າສະສາງຊັບສິນໃຫ້ບໍລິສັດເຫຼັກນະຄອນຫຼວງ ແລະ ບໍລິສັດ ຄຸນເພີງ 3.914.614.600 ກີບ, ຄ່າໃຊ້ຈ່າຍດຳເນີນງານປະຈຳອັນປະມານ 10.900.000.000 ກີບ.

(3) ລາຍການທີ່ຍັງຄ້າງຈ່າຍ:

ເງິນອຸດໜູນຂອງພະນັກງານອອກການຍັງຄ້າງຈ່າຍຈຳນວນ 3.918.319.964,1 ກີບ, ວາງແຜນຈະຈ່າຍໃຫ້ສຳເລັດພາຍໃນວັນທີ 30 ສິງຫາ 2026.

4. ການປັນຜົນກຳໄລ

ເນື່ອງຈາກໃນປີ 2025, ທຸລະກິດໃໝ່ຂອງບໍລິສັດຍັງຢູ່ໃນໄລຍະການວາງແຜນການ ແລະ ດຳເນີນງານ ຈຶ່ງບໍ່ມີຜົນກຳໄລທີ່ສາມາດປັນໃຫ້ຜູ້ຖືຮຸ້ນໄດ້ ສະນັ້ນ ປີນີ້ຈະບໍ່ມີການປັນຜົນກຳໄລ.

III. ສະພາບການປະຕະບັດວຽກງານການເງິນປະຈຳປີ 2025

ໃນປີ 2025, ບໍລິສັດໄດ້ປະຕິບັດຕາມແຜນວຽກງານການເງິນ 9 ລາຍການທີ່ໄດ້ຮັບຮອງຜ່ານສະພາ

ບໍລິຫານຂອງປີ 2025 ຢ່າງເຂັ້ມງວດ, ໂດຍຖື " ການຄວບຄຸມເງິນທຶນ、ການສະໜັບສະໜຸນໂຄງການ、ການກວດສອບຊັບສິນ、ການປັບປຸງລະບົບ " ເປັນຫຼັກ, ຮັບປະກັນຄວາມໝັ້ນຄົງຂອງການດຳເນີນງານໃນໄລຍະການຫັນປ່ຽນຮູບແບບທຸລະກິດຂອງບໍລິສັດ, ສະພາບການປະຕິບັດລະອຽດດັ່ງນີ້:

1. ການຄຸ້ມຄອງເງິນທຶນ ແລະ ການຈ່າຍເງິນ

(1) ຈັດຫາເງິນໝູນວຽນຢ່າງສົມເຫດສົມຜົນ, ສ້າງກົນໄກໄລ່ລຽງສະເພາະໂຄງການ, ໃຫ້ບຸລິມະສິດແກ່ຄ່າໃຊ້ຈ່າຍໃນການດຳເນີນງານປະຈຳວັນ、ຄ່າໃຊ້ຈ່າຍໃນການກໍ່ສ້າງໂຄງການສຳຄັນ ແລະ ເງິນອຸດໜູນຂອງພະນັກງານອອກການ.

(2) ຈັດຫາເງິນທຶນຈາກຫຼາຍຊ່ອງທາງ, ສະໜອງເງິນທຶນໃຫ້ແກ່ໂຄງການອາຄານວັດທະນະທຳ-ທ່ອງທ່ຽວໃນການກໍ່ສ້າງສຳເລັດໂຄງສ້າງເບຕົ້ງຫຼັກ, ການຂໍອະນຸມັດຂອງໂຄງການພະພຸດທະຮູບພູຜາບ໊ວ, ການກະກຽມວຽກຂອງໂຄງການປຸງແຕ່ງກາເຟ ແລະ ວຽກງານອື່ນໆ. ຄວບຄຸມປະສິດທິພາບການນຳໃຊ້ເງິນທຶນຢ່າງເຂັ້ມງວດ, ການດຳເນີນງານທາງດ້ານເງິນທຶນບໍ່ໄດ້ເກີດຄວາມສ່ຽງດ້ານການໝູນວຽນຂອງເງິນທຶນ.

2. ວຽກງານການເງິນທີ່ກ່ຽວກັບໂຄງການສຳຄັນ

(1) ໂຄງການອາຄານວັດທະນະທຳ-ທ່ອງທ່ຽວ

ໃນວັນທີ 21 ຕຸລາ 2025, ໄດ້ສຳເລັດການກໍ່ສ້າງໂຄງສ້າງເບຕົ້ງຫຼັກ 20 ຊັ້ນ. ຝ່າຍການເງິນໄດ້ຕິດຕາມການສະສາງຄ່າກໍ່ສ້າງ ແລະ ການຈັດປະເພດຕົ້ນທຶນ, ໄລ່ລຽງຕົ້ນທຶນການກໍ່ສ້າງທັງໝົດຢ່າງແຈ້ງຊັດ ເຊິ່ງໄດ້ສະໜອງຂໍ້ມູນການເງິນທີ່ສົມບູນເປັນຫຼັກຖານໃຫ້ແກ່ການຕົກແຕ່ງພາຍໃນຂອງໄຕມາດ 1 ປີ 2026, ການດຳເນີນງານໃນໄລຍະກາງ ແລະ ການກຳນົດລາຄາເຊົ່າ/ຂາຍ.

(2) ບັນດາໂຄງການທີ່ຕັ້ງຢູ່ເມືອງອັ້ງວຽງ

ສະໜອງການສະໜັບສະໜຸນດ້ານການເງິນໃຫ້ແກ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງເຂດສາທິດເສດຖະກິດອຸດສາຫະກຳວັດທະນະທຳ ແລະ ທ່ອງທ່ຽວ ວັ້ງວຽງ ແລະ ການຍືນຍັນສິດນຳໃຊ້ທີ່ດິນເພື່ອໂຄງການທ່ອງທ່ຽວ, ຮັບປະກັນເງິນທຶນສຳລັບການອອກແບບລະອຽດ ແລະ ການສຳຫຼວດພາກສະໜາມຂອງໂຄງການພະພຸດທະຮູບພູຜາບ໊ວອັ້ງວຽງ ຫ໊ວໜ່ວຍກໍ່ສ້າງໄດ້ເຂົ້າປະຈຳການຢູ່ພາກສະໜາມ, ກຽມຄວາມພ້ອມທາງດ້ານການເງິນໃຫ້ແກ່ການເລີ່ມຕົ້ນສ້າງໂຄງການໂຕສຳຄັນໃນຕົ້ນປີ 2026.

(3) ໂຄງການທີ່ລົງທຶນ

ໂຄງການຂຸດຄົ້ນບໍ່ແຮ່ຂອງແຂວງຫ໊ວພັນ ໄດ້ສຳເລັດຂັ້ນຕອນການພິຈາລະນາຂອງລັດຖະບານ, ຝ່າຍການເງິນໄດ້ປະສານງານກັບຜູ້ຮ່ວມມືຂຸດຄົ້ນ ແລະ ສຳເລັດການຄາດຄະເນງົບປະມານໃນການກະກຽມຂຸດຄົ້ນໄລຍະຕົ້ນ.

(4) ໂຄງການກໍ່ສ້າງປະກອບເປັນຊຸດ:

ໂຄງການກໍ່ສ້າງທ໊ພັກພະນັກງານຂອງກ໊ບໍລິສັດ ໄດ້ສຳເລັດຕາມກຳນົດເວລາໃນເດືອນ ທັນວາ 2025, ຝ່າຍການເງິນໄດ້ສຳເລັດການໄລ່ລຽງຕົ້ນທຶນກໍ່ສ້າງໂຄງການ ແລະ ສ້າງແຜນການຄາດຄະເນຜົນປະໂຫຍດສຳລັບການນຳໃຊ້ເອງ, ການໃຫ້ເຊົ່າ ຫຼື ການຂາຍໃນອະນາຄົດ.

3. ການກວດສອບຊັບສິນ ແລະ ການປະເມີນມູນຄ່າ

(1) ສຳເລັດການກວດສອບຊັບສິນຂອງກຸ່ມບໍລິສັດຢ່າງຮອບດ້ານ, ກວດສອບກຳມະສິດ, ຈຳນວນ ແລະ ມູນຄ່າຂອງຊັບສິນຄົງທີ່, ໂຄງການກໍ່ສ້າງທີ່ກຳລັງດຳເນີນງານ, ຊັບສິນບໍ່ມີຕົວຕົນ, ສິນຄ້າໃນສ້າງ ແລະ ລະລາຍອື່ນໆ, ສ້າງບົດລາຍງານການກວດສອບຊັບສິນທີ່ສົມບູນ, ຮັບປະກັນຄວາມປອດໄພ ແລະ ຄວາມຄົບຖ້ວນຂອງຊັບສິນບໍລິສັດ.

(2) ຊຸກຍູ້ວຽກງານການປະເມີນມູນຄ່າຕາມມູນຄ່າຍຸດຕິທຳ ແລະ ການລາຍງານສຳລັບຊັບສິນທີ່ບໍ່ທັນໄດ້ບັນທຶກເຂົ້າບັນຊີຂອງບໍລິສັດແມ່, ຈັດລຽງລາຍການບັນຊີຊັບສິນ, ສຳເລັດການສັບຊ້ອນຂໍ້ມູນການປະເມີນ, ເພື່ອສ້າງພື້ນຖານໃຫ້ແກ່ການຍົກສູງມູນຄ່າຮຸ້ນ ແລະ ມູນຄ່າຕົວຈິງຂອງບໍລິສັດ, ພ້ອມທັງສ້າງ

ພື້ນຖານໃຫ້ແກ່ການດຳເນີນງານໃນຕະຫຼາດທຶນໃນອະນາຄົດ.

4. ລະບົບການເງິນ ແລະ ການກໍ່ສ້າງການຄວບຄຸມພາຍໃນ

(1) ປັບປຸງລະບົບບັນຊີການເງິນຂອງກຸ່ມບໍລິສັດພາຍໃຕ້ກອບການຄຸ້ມຄອງວິສາຫະກິດທີ່ທັນສະໄໝ, ກຳນົດເອກະພາບກັນຕໍ່ມາດຕະຖານການໄລ່ລຽງບັນຊີຂອງກຸ່ມບໍລິສັດ ແລະ ບໍລິສັດລູກ, ສ້າງກົນໄກການລາຍງານ ແລະ ວິເຄາະຂໍ້ມູນການເງິນເປັນປະຈຳ, ຍົກສູງຄວາມທັນເວລາ ແລະ ຄວາມຖືກຕ້ອງຂອງຂໍ້ມູນການເງິນ.

(2) ເພີ່ມທະວີການກວດກາການເງິນ ແລະ ການຄວບຄຸມຄວາມສ່ຽງ, ສ້າງຂໍ້ກຳນົດລະອຽດກ່ຽວກັບການຄວບຄຸມຕົ້ນທຶນສະເພາະບໍລິສັດລູກ ແລະ ໂຄງການສຳຄັນ, ສ້າງກົນໄກປະເມີນຄວາມສ່ຽງການລົງທຶນ ແລະ ການລະດົມທຶນ, ຊ່ວຍບໍລິສັດສ້າງລະບົບການຄວບຄຸມພາຍໃນທີ່ສົມບູນ ລວມຂະບວນການທັງໝົດເຊັ່ນ: ລາຍຮັບ-ລາຍຈ່າຍ, ການຈັດຊື້ຂອງໂຄງການ, ການນຳໃຊ້ເງິນທຶນ.

5. ວຽກງານການລົງທຶນ-ລະດົມທຶນ ແລະ ການເປີດເຜີຍຂໍ້ມູນ

(1) ສຳເລັດວິເຄາະການລົງທຶນໃນໂຄງການສຳຄັນຕ່າງໆ, ສ້າງແຜນການລົງທຶນ ແລະ ລະດົມທຶນເປັນໄລຍະໃຫ້ແກ່ໂຄງການອາຄານອັດທະນະທຳ-ທ່ອງທ່ຽວ, ການປຸງແຕ່ງກາເຟ, ພະພຸດທະຮູບພູຜາບົວວັງວຽງ ແລະ ການຂຸດຄົ້ນບໍ່ແຮ່. ໃນນັ້ນ, ເຂດທ່ອງທ່ຽວພູຜາບົວວັງວຽງ ໄດ້ສຳເລັດການກະກຽມເບື້ອງຕົ້ນສຳລັບການລະດົມທຶນແບບບໍ່ເປີດເຜີຍ (Private Fund) ຈຳນວນ 30 ລ້ານ ໂດລາສະຫະລັດ.

(2) ເຮັດບົດລາຍງານການເງິນໃນໄລຍະການຫັນປ່ຽນຮູບແບບທຸລະກິດຫຼັກ, ເປີດເຜີຍຂໍ້ມູນຢ່າງທັນເວລາ ແລະ ຖືກຕ້ອງ, ຮັບປະກັນສິດທິການຮັບຮູ້ຂໍ້ມູນຂອງຜູ້ຖືຮຸ້ນ ແລະ ພາກສ່ວນກ່ຽວຂ້ອງ; ພ້ອມທັງ ຊຸກຍູ້ການຟື້ນຟູການຊື້ຂາຍຮຸ້ນ ແລະ ການອອກຈຳໜ່າຍຮຸ້ນເພີ່ມຂອງບໍລິສັດ.

6. ການຄຸ້ມຄອງມູນນິທິພະພຸດທະຮູບພູຜາບົວ

ເຂົ້າຮ່ວມໃນການຄຸ້ມຄອງລາຍຈ່າຍປະຈຳວັນຂອງມູນນິທິພະພຸດທະຮູບພູຜາບົວ, ສ້າງກົນໄກການໄລ່ລຽງສຳລັບເງິນທຶນສະເພາະໃຊ້, ກວດສອບຂອບເຂດການນຳໃຊ້ທຶນຢ່າງເຂັ້ມງວດ, ຮັບປະກັນເງິນທຶນຂອງມູນນິທິແມ່ນຖືກນຳໃຊ້ເຂົ້າໃນການກໍ່ສ້າງສ່ວນປະກອບຂອງໂຄງການພະພຸດທະຮູບພູຜາບົວ ເຊັ່ນ ພະພຸດທະຮູບອົງໃຫຍ່, ວັດ ແລະ ພາກສ່ວນເພື່ອຜັນປະໂຫຍດສາທາລະນະ .

IV. ລັກສະນະລວມຂອງການດຳເນີນງານດ້ານການເງິນປະຈຳປີ 2025

ປີ 2025 ບໍລິສັດຍັງຢູ່ໃນໄລຍະຂ້າມຜ່ານຈາກການກະກຽມໂຄງການໄປສູ່ການຈັດຕັ້ງປະຕິບັດຕົວຈິງ, ຍັງບໍ່ທັນມີລາຍໄດ້ຈາກທຸລະກິດຫຼັກ, ການດຳເນີນງານດ້ານການເງິນມີລັກສະນະຄືດັ່ງນີ້:

1. ດ້ານຊັບສິນ

ມູນຄ່າຂອງໂຄງການກໍ່ສ້າງທີ່ກຳລັງດຳເນີນງານໄດ້ເພີ່ມຂຶ້ນຕາມການກໍ່ສ້າງໂຄງການອາຄານອັດທະນະທຳ-ທ່ອງທ່ຽວ ແລະ ພະພຸດທະຮູບພູຜາບົວວັງວຽງ, ຂະໜາດຊັບສິນຂອງບໍລິສັດໄດ້ເພີ່ມຂຶ້ນເມື່ອທຽບໃສ່ປີ 2024; ການໝູນວຽງເງິນທຶນເປັນເງິນຕາແມ່ນຢູ່ສະພາບເໝາະສົມເພື່ອຮອງຮັບການຊຸກຍູ້ໂຄງການ.

2. ດ້ານໜີ້ສິນ

ເນື່ອງຈາກມີການຊ່ວຍຈ່າຍກ່ອນໃນໂຄງການກໍ່ສ້າງ ແລະ ການລະດົມທຶນຈຳນວນໜ້ອຍ, ໜີ້ຕ້ອງສົ່ງ ແລະ ໜີ້ສິນກັບພາກສ່ວນກ່ຽວຂ້ອງໄດ້ເພີ່ມຂຶ້ນໜ້ອຍໜຶ່ງ, ເງິນເດືອນພະນັກງານທີ່ຕ້ອງຈ່າຍ ແລະ ພາສີອາກອນຂອງລັດຖະບານໄດ້ຊຳລະຕາມແຜນກາທີ່ອລະກ້າວ, ໂຄງປະກອບໜີ້ສິນມີແງ່ຂະຫຍາຍດີຂຶ້ນ.

3. ດ້ານກຳໄລ-ຂາດທຶນ

ຄ່າໃຊ້ຈ່າຍໃນການບໍລິຫານໄດ້ຫຼຸດລົງເມື່ອທຽບໃສ່ປີ 2024 ໂດຍຜ່ານການຄຸ້ມຄອງແບບລະອຽດ, ໄດ້ຫັກຄ່າສູນເສຍການຫຼຸດລາຄາເຄື່ອງໃນສາງ 2.787.749.803 ກີບ.

4. ດ້ານການດຳເນີນງານ

ລະບົບການຄວບຄຸມການເງິນຄ່ອຍໆສົມບູນຂຶ້ນ, ຄວາມສາມາດໃນການໄລ່ລຽງການເງິນໂຄງການ, ການຄວບຄຸມຕົ້ນທຶນ ແລະ ການປະເມີນຄວາມສ່ຽງໄດ້ຍົກລະດັບຂຶ້ນຢ່າງເດັ່ນຊັດ, ໄດ້ກຽມຄວາມພ້ອມທາງດ້ານການເງິນສຳລັບການປະຕິບັດໂຄງການທີ່ຈະສ້າງກຳໄລໃນປີ 2026.

V. ແຜນການວຽກງານການເງິນສຳຄັນປະຈຳປີ 2026

ປີ 2026 ເປັນປີທີ່ໂຄງການສຳຄັນສາມາດສ້າງກຳໄລໄດ້, ໂຄງການອາຄານວັດທະນະທຳ-ທ່ອງທ່ຽວ, ການປຸງແຕ່ງກາເຟ, ຕະຫຼາດເຄື່ອງອາໄຫຼ່ກົນຈັກກະສິກຳ ແລະ ປ່າໄມ້ ຈະເລີ່ມສ້າງລາຍໄດ້ເປັນເທື່ອລະກ້າວ, ໂຄງການພະພຸດທະຮູບພູຜາບ໋ວ ແລະ ໂຄງການຂຸດຄົ້ນບໍ່ແຮ່ຈະເຂົ້າສູ່ໄລຍະກໍ່ສ້າງຫ ແລະ ດຳເນີນງານ. ວຽກງານການເງິນຂອງບໍລິສັດ ຈະຖື " ການສ້າງກຳໄລ, ການຍົກສູງມູນຄ່າ, ການປ້ອງກັນຄວາມສ່ຽງ " ເປັນຫຼັກ, ເຊື່ອມໂຍງກັບແຜນການດຳເນີນທຸລະກິດປີ 2026-2028 ເຊິ່ງມີແຜນລະອຽດ ດັ່ງນີ້:

1. ສ້າງລະບົບການໄລ່ລຽງຜົນກຳໄລໂຄງການ

ສຳລັບໂຄງການທີ່ສ້າງກຳໄລ ເຊັ່ນ: ການເຊົ່າ/ຂາຍອາຄານວັດທະນະທຳ-ທ່ອງທ່ຽວ, ການຜະລິດ ແລະ ຂາຍຜະລິດຕະພັນກາເຟ, ການດຳເນີນງານໄລຍະທີ 1 ຂອງຕະຫຼາດເຄື່ອງອາໄຫຼ່ກົນຈັກກະສິກຳ ແລະ ປ່າໄມ້, ຈະສ້າງຕັ້ງສູນກຳໄລແຍກຕ່າງຫາກ, ຄິດໄລ່ລາຍໄດ້, ຕົ້ນທຶນ ແລະ ກຳໄລຂອງແຕ່ລະໂຄງການຢ່າງແຈ້ງຊັດ, ປັບປຸງຍຸດທະສາດການດຳເນີນງານ ແລະ ການເງິນໃຫ້ທັນກັບສະພາບຕະຫຼາດ.

2. ເພີ່ມທະວີການຄວບຄຸມຕົ້ນທຶນຕະຫຼອດຂະບວນການໂຄງການ

ສຳລັບໂຄງການທີ່ກຳລັງກໍ່ສ້າງເຊັ່ນ: ພະພຸດທະຮູບພູຜາບ໋ວວັງວຽງ ແລະ ໂຄງການຂຸດຄົ້ນບໍ່ແຮ່ແຂວງຫົວພັນ, ໃຫ້ປະຕິບັດການລົງທຶນຕາມງົບປະມານຢ່າງເຂັ້ມງວດ, ປັບປຸງຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ການຈັດຊື້; ສ້າງກົນໄກຕິດຕາມກວດກາຕົ້ນທຶນແບບເຄື່ອນໄຫວ, ວິເຄາະຕົ້ນທຶນ ແລະ ດັດແກ້ຜິດດ່ຽງເປັນປະຈຳ.

3. ຊຸກຍູ້ການລົງທຶນ ແລະ ການລະດົມທຶນໃຫ້ສຳເລັດຜົນ

ຊຸກຍູ້ໃຫ້ການລະດົມທຶນແບບບໍ່ເປີດເຜີຍໃນມູນຄ່າ 30 ລ້ານ ໂດລາສະຫະລັດສຳລັບເຂດທ່ອງທ່ຽວພູຜາບ໋ວວັງວຽງປະສົບຜົນສຳເລັດ; ປະຕິບັດການປະສານງານກັບຄູ່ຮ່ວມມືທີ່ຊ່ວຍຈ່າຍກ່ອນໃນໂຄງການຂຸດຄົ້ນບໍ່ແຮ່ ແລະ ການຄວບຄຸມເງິນທຶນໃຫ້ດີ; ເລັ່ງລັດກະກຽມວຽກດ້ານການເງິນສຳລັບຟື້ນຟູການຊື້ຂາຍຮຸ້ນ ແລະ ການອອກຈຳໜ່າຍຮຸ້ນເພີ່ມຂອງບໍລິສັດ.

4. ປັບປຸງການເອົາຊັບສິນຄ້ຳປະກັນ

ສຳເລັດການແຈ້ງຊັບສິນທີ່ບໍ່ທັນໄດ້ບັນທຶກເຂົ້າບັນຊີຂອງບໍລິສັດແມ່ ໂດຍອີງໃສ່ການກວດສອບຊັບສິນ ແລະ ຜົນການປະເມີນມູນຄ່າຍຸດຕິທຳຂອງຊັບສິນທີ່ໄດ້ຈົດເຂົ້າບັນຊີ (ເປັນຕົ້ນແມ່ນສິດນຳໃຊ້ທີ່ດິນ) ໃນປີ 2025, ປັບປຸງໂຄງປະກອບຊັບສິນ ແລະ ໜີ້ສິນຂອງບໍລິສັດ; ຂຸດຄົ້ນຄວາມສາມາດບິ່ມຊ້ອນການເພີ່ມມູນຄ່າຂອງຊັບສິນ, ຍົກສູງມູນຄ່າຮຸ້ນ ແລະ ມູນຄ່າຕົວຈິງຂອງບໍລິສັດ, ສ້າງພື້ນຖານສຳລັບການດຳເນີນງານໃນຕະຫຼາດທຶນ.

5. ຈັດຕັ້ງປະຕິບັດການປະເມີນຜົນການເງິນ ແລະ ການແບ່ງແຍກເປົ້າໝາຍ

ອີງຕາມເປົ້າໝາຍການຄາດຄະເນທາງການເງິນຂອງແຕ່ລະໂຄງການໃນປີ 2026-2028, ກຳນົດຕົວເລກຄາດໝາຍປະເມີນຜົນການເງິນປະຈຳປີ, ແບ່ງແຍກເປົ້າໝາຍລາຍໄດ້ ແລະ ກຳໄລສຸດທິໃຫ້ແຕ່ລະຂະແໜງການທຸລະກິດ ແລະ ບໍລິສັດລູກ, ກຳນົດມາດຕະຖານການປະເມີນຜົນ ແລະ ມາດຕະການຊຸກຍູ້.

6. ເພີ່ມທະວີການປ້ອງກັນຄວາມສ່ຽງດ້ານເງິນຕາຕ່າງປະເທດ ແລະ ການເງິນ

ປະສົມປະສານກັບທຸລະກິດຂ້າມຊາຍແດນ ແລະ ການລົງທຶນ-ລະດົມທຶນຂອງບໍລິສັດ, ສ້າງກົນໄກປ້ອງກັນຄວາມສ່ຽງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ; ປັບປຸງລະບົບເຕືອນໄພສຳລັບການລົງທຶນ-ລະດົມທຶນ, ການນຳໃຊ້ທຶນ, ໜີ້ຕ້ອງຮັບ ແລະອື່ນໆ, ຮັບປະກັນຄວາມປອດໄພໃນການດຳເນີນງານດ້ານການເງິນຂອງບໍລິສັດ.

7. ປັບປຸງການຄວບຄຸມການເງິນຂອງກຸ່ມບໍລິສັດຢ່າງຕໍ່ເນື່ອງ

ປັບປຸງລະບຽບການຄຸ້ມຄອງການເງິນຂອງກຸ່ມບໍລິສັດ ແລະ ບໍລິສັດລູກໃຫ້ສົມບູນຍິ່ງຂຶ້ນ, ເພີ່ມທະວີການຝຶກອົບຮົມຄວາມສາມາດວິຊາຊີບຂອງພະນັກງານການເງິນ; ຊຸກຍູ້ການຫັນເປັນດິຈິຕອນທາງການເງິນ, ຍົກສູງປະສິດທິພາບ ແລະ ຄວາມແຈ້ງຊັດໃນການໄລ່ລຽງ, ວິເຄາະ ແລະ ຕັດສິນທາງການເງິນ.

8. ຮັບປະກັນ ແລະ ວິເຄາະກຳໄລຂອງໂຄງການ

ສຳລັບການຂາຍ, ການເຊົ່າ ແລະ ການດຳເນີນງານຂອງໂຄງການທີ່ໄດ້ສ້າງກຳໄລ ໃຫ້ຕິດຕາມ ແລະ ວິເຄາະຂໍ້ມູນການເງິນຢ່າງໃກ້ຊິດ ເພື່ອຄົ້ນພົບບັນຫາການດຳເນີນງານທັນເວລາ ແລະ ສະເໜີວິທີແກ້ໄຂທາງການເງິນ ຮັບປະກັນໃຫ້ແຕ່ລະໂຄງການບັນລຸເປົ້າໝາຍກຳໄລທີ່ຄາດໝາຍໄວ້.

VI. ການສະຫຼຸບ

ໃນປີ 2025, ບໍລິສັດໄດ້ສຳເລັດວຽກງານການເງິນຕ່າງໆທີ່ສະພາບໍລິຫາຫານໄດ້ກຳນົດໄວ້ຢ່າງຈິບງາມ ໂດຍພື້ນຖານ, ບັນລຸຜົນສຳເລັດທີ່ເດັ່ນຊັດໃນດ້ານການຄວບຄຸມເງິນທຶນ, ການສະໜັບສະໜູນໂຄງການ, ການກວດສອບຊັບສິນ ແລະ ການກໍ່ສ້າງລະບົບ, ຊຸກຍູ້ໂຄງການອາຄານວັດທະນະທຳ-ທ່ອງທ່ຽວ ແລະ ພະພຸດທະຮູບພູຜາບ໋ອມີຄວາມຄືບໜ້າ, ຂະໜາດການຂາດທຶນໄດ້ຫຼຸດລົງຕື່ມ, ຄວາມສາມາດໃນການດຳເນີນງານທາງດ້ານການເງິນ ແລະ ລະດັບການປ້ອງກັນຄວາມສ່ຽງໄດ້ຍົກສູງຂຶ້ນຢ່າງຕໍ່ເນື່ອງ.

ປີ 2026 ເປັນປີທີ່ບໍລິສັດຈະສ້າງຜົນກຳໄລ, ໂຄງການສຳຄັນຕ່າງໆຈະເລີ່ມສ້າງລາຍໄດ້ເທື່ອລະກ້າວ, ວຽກງານການເງິນຂອງບໍລິສັດຈະຖືການຊຸກຍູ້ການສ້າງກຳໄລຂອງໂຄງການເປັນຫຼັກ, ຜ່ານການໄລ່ລຽງແບບລະອຽດ, ການຄວບຄຸມຕົ້ນທຶນທຸກຂັ້ນຕອນ ແລະ ການລົງທຶນ-ລະດົມທຶນແບບຫຼາຍລະບົບຮັບປະກັນໃຫ້ເປົ້າໝາຍທາງການເງິນຂອງແຜນການດຳເນີນທຸລະກິດປີ 2026-2028 ບັນລຸຜົນສຳເລັດເປັນຢ່າງດີ. ໃນອະນາຄົດ, ບໍລິສັດຈະສືບຕໍ່ປັບປຸງລະບົບການຄວບຄຸມການເງິນ, ຍົກສູງຄວາມສາມາດໃນການດຳເນີນງານດ້ານທຶນຕະຫຼາດ, ຄ່ອຍໆຊຶດເຊີຍການຂາດທຶນສະສົມ, ສ້າງຄຸນຄ່າໃຫ້ແກ່ຜູ້ຖືຮຸ້ນ, ພ້ອມທັງຊ່ວຍຍົກລະດັບການພັດທະນາຂອງຂະແໜງການວັດທະນະທຳ ແລະ ທ່ອງທ່ຽວຂອງລາວ ເພື່ອບັນລຸຜົນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມຄວບຄູ່ກັນ.

ບົດລາຍງານວຽກງານການເງິນປະຈຳປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໄດ້ສິ້ນສຸດລົງພຽງເທົ່ານີ້ ເຊິ່ງບົດດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສາມັນສະພາບໍລິຫານສະໄໝທີ 10 ຄັ້ງທີ 7 ປີ 2026 ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນຄັ້ງນີ້ເພື່ອພິຈາລະນາ ແລະ ຮັບຮອງ.

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ
ນະວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	1,276,390,036	1,181,534,317
ຊັບສິນພວມກໍ່ສ້າງ	6	19,908,964,250	33,099,471,597
ຊັບສິນບັດຄີງທີ່ບໍ່ມີຕົວຕົນ	5	3,779,367,504	3,698,058,835
ລວມຊັບສິນບໍ່ໝຸນວຽນ		**24,964,721,790**	**37,979,064,749**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	7,206,703,435	4,755,554,770
ເຄື່ອງໃນສາງ	8	74,687,556,805	12,324,012,453
ໜີ້ຕ້ອງຮັບທາງການຄ້າ	22	1,000,000,000	1,000,000,000
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ	9	36,021,574	1,656,111,790
ເງິນສົດ	10	788,807,470	644,185,612
ລວມຊັບສິນໝຸນວຽນ		**83,773,089,283**	**20,379,864,625**
ລວມຊັບສິນທັງໝົດ		**108,737,811,073**	**58,358,929,374**

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ	11	6,408,794,853	8,025,747,856
ເງິນລ່ວງໜ້າຈາກລູກຄ້າ	12	25,583,759,134	12,440,807,689
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	22	12,969,716,098	11,567,018,084
ພັນທະອາກອນ	13	9,258,847,470	8,327,444,701
ໜີ້ຕ້ອງສົ່ງໃຫ້ພະນັກງານ		15,354,513,104	12,131,161,070
ໜີ້ຕ້ອງສົ່ງອື່ນໆ	14	83,897,242,635	25,297,650,701
ລວມໜີ້ສິນໝຸນວຽນ		**153,472,873,294**	**77,789,830,101**
ລວມໜີ້ສິນທັງໝົດ		**153,472,873,294**	**77,789,830,101**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	15	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(109,376,555,872)	(84,072,394,380)
ລວມທຶນ		**(44,735,062,221)**	**(19,430,900,727)**
ລວມໜີ້ສິນ ແລະ ທຶນທັງໝົດ		**108,737,811,073**	**58,358,929,374**

ທ່ານ ເນ້ຍ ເຫຼ້ຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ້ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*2025* ກີບ	*2024* ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	16	522,613,836	17,681,203,801
ລາຍຈ່າຍຈາກການດຳເນີນງານອື່ນໆ	17	(6,782,636,260)	(3,690,754,872)
ລາຍຈ່າຍໃນການບໍລິຫານ	18	(16,388,899,963)	(22,329,606,896)
ຂາດທຶນຈາກການດຳເນີນງານ		**(22,648,922,387)**	**(8,339,157,967)**
ລາຍຮັບທາງການເງິນ	19	108,198	393,237,798
ຕົ້ນທຶນທາງການເງິນ	20	(2,655,347,305)	-
ຂາດທຶນກ່ອນອາກອນ		**(25,304,161,494)**	**(7,945,920,169)**
ລາຍຈ່າຍອາກອນກຳໄລ	21	-	-
ຂາດທຶນສຸດທິຫຼັງອາກອນ		**(25,304,161,494)**	**(7,945,920,169)**

ທ່ານ ເນັຍເຫຼີຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ ກີບ	*ມູນຄ່າຮຸ້ນ ກີບ*	*ຄັງສຳຮອງຕາມລະບຽບການ ກີບ*	*ຄັງສຳຮອງເພື່ອຂະຫຍາຍອາຄານ ກີບ*	*ຂາດທຶນສະສົມ ກີບ*	*ລວມທັງໝົດ ກີບ*
ນະວັນທີ 1 ມັງກອນ 2024	20,002,000,000	18,385,975,511	7,704,052,546	18,549,465,596	(76,126,474,211)	(11,484,980,558)
ຂາດທຶນສຸດທິພາຍໃນປີ	-	-	-	-	(7,945,920,169)	(7,945,920,169)
ນະວັນທີ 31 ທັນວາ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(84,072,394,380)**	**(19,430,900,727)**
ນະວັນທີ 1 ມັງກອນ 2025	20,002,000,000	18,385,975,511	7,704,052,546	18,549,465,596	(84,072,394,380)	(19,430,900,727)
ຂາດທຶນສຸດທິພາຍໃນປີ	-	-	-	-	(25,304,161,494)	(25,304,161,494)
ນະວັນທີ 31 ທັນວາ 2025	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(109,376,555,874)**	**(44,735,062,221)**

ທ່ານ ເນ້ຍ ເຫຼຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈຶ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*2025 ກີບ*	*2024 ກີບ*
ກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(25,304,161,494)**	**(7,945,920,169)**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	554,149,582	523,787,906
ເງິນແຮ/(ການເກັບຄືນເງິນແຮ)ສຳລັບເຄື່ອງໃນສາງ		2,835,653,508	(8,723,578)
ການເກັບຄືນເງິນແຮສຳລັບໜີ້ທອງຍາກ		(37,936,200)	(49,416,000)
ຂາດທຶນ/(ກຳໄລ) ຈາກອັດຕາແລກປ່ຽນຈາກການຕີ ມູນຄ່າຂອງເງິນຕາຕ່າງປະເທດ		1,245,024,622	(130,762,344)
ກຳໄລຈາກການຂາຍຊັບສິນ ແລະ ອັດຖິບ		(210,646,794)	(5,257,532,441)
ລາຍຈ່າຍດອກເບ້ຍ		1,273,945,035	-
ການດັດແກ້ທຶນໝຸນວຽນ:			
ຫຼຸດລົງ/(ເພີ່ມຂຶ້ນ) ຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ ຕ້ອງຮັບອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະຈາກ ພາກສ່ວນທີ່ກ່ຽວຂ້ອງ		1,658,026,416	(126,925,548)
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(2,505,256,861)	(3,188,222,341)
ເພີ່ມຂຶ້ນຂອງເຄື່ອງໃນສາງ		(47,963,878,166)	(5,434,453,160)
ເພີ່ມຂຶ້ນຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງ ສົ່ງອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະໃຫ້ ພາກສ່ວນທີ່ກ່ຽວຂ້ອງ		62,034,136,231	4,848,580,143
ລາຍຮັບດອກເບ້ຍ		108,198	68,262
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳ ເນີນງານ		**(6,420,835,923)**	**(16,772,821,292)**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(632,089,381)	(620,602,137)
ລາຍຮັບຈາກການຂາຍຊັບສິນບັດຄົງທີ່		210,646,794	5,270,692,440
ການຈັດຊື້ຊັບສິນທີ່ບໍ່ມີຕົວຕົນ		(98,224,589)	(19,440,000)
ຊັບສິນພວມກໍ່ສ້າງ		(4,121,549,170)	(2,277,160,534)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**(4,641,216,346)**	**2,353,489,770**

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	2025 ກີບ	2024 ກີບ
ກິດຈະກຳທາງການເງິນ			
ເພີ່ມເງິນກູ້ຢືມ		11,351,389,212	14,000,410,000
ຈ່າຍຄືນເງິນກູ້ຢືມ		(198,235,755)	(561,389,949)
ກະແສເງິນສົດສຸດທິຈາກກິດຈະກຳການ ເງິນ		**11,153,153,457**	**13,439,020,051**
ເງິນສົດເພີ່ມຂຶ້ນ/(ຫຼຸດລົງ)ສຸດທິ		91,101,188	(980,311,471)
ເງິນສົດຕົ້ນໄລຍະ		644,185,613	1,626,190,316
ຜົນກະທົບຈາກຄວາມຜັນຜວນຂອງອັດຕາແລກປ່ຽນ		53,520,668	(1,693,233)
ເງິນສົດທ້າຍໄລຍະ	**10**	**788,807,469**	**644,185,613**

ທ່ານ ເນັຍ ເຫຼີຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນແບບແຍກກິດຈະການ
ນະວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	497,038,822	762,996,896
ຊັບສິນພວມກໍ່ສ້າງ	6	18,132,257,751	30,673,610,031
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	5	3,736,012,504	3,681,415,835
ການລົງທຶນໃນບໍລິສັດໃນເຄືອ	7	5,849,064,057	5,203,557,146
ລວມຊັບສິນບໍ່ໝຸນວຽນ		**28,214,373,134**	**40,321,579,908**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	8	6,561,575,490	4,322,776,548
ເຄື່ອງໃນສາງ	9	74,687,556,805	12,324,012,453
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ	22	4,862,634,419	2,847,957,610
ໜີ້ຕ້ອງຮັບທາງການຄ້າ	10	36,021,574	1,656,111,790
ເງິນສົດ	11	716,918,461	574,997,658
ລວມຊັບສິນໝຸນວຽນ		**86,864,706,749**	**21,725,856,059**
ລວມຊັບສິນທັງໝົດ		**115,079,079,883**	**62,047,435,967**

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນແບບແຍກກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	31 ທັນວາ 2025 ກີບ	31 ທັນວາ 2024 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ	12	6,485,981,670	8,025,747,856
ເງິນລ່ວງໜ້າຈາກລູກຄ້າ	13	24,046,259,134	12,440,807,689
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	23	16,056,542,166	12,887,018,084
ພັນທະອາກອນ	14	9,168,578,357	8,152,671,650
ໜີ້ຕ້ອງສົ່ງໃຫ້ພະນັກງານ		13,913,060,489	11,074,331,574
ໜີ້ຕ້ອງສົ່ງອື່ນໆ	15	83,895,572,835	24,682,695,701
ລວມໜີ້ສິນໝຸນວຽນ		**153,565,994,651**	**77,263,272,554**
ລວມໜີ້ສິນທັງໝົດ		**153,565,994,651**	**77,263,272,554**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	16	20,002,000,000	20,002,000,000
ສ່ວນເພີ່ມມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(103,128,408,421)	(79,857,330,240)
ລວມທຶນ		**(38,486,914,768)**	**(15,215,836,587)**
ລວມໜີ້ສິນ ແລະ ທຶນທັງໝົດ		**115,079,079,883**	**62,047,435,966**

ກະຊວງ ວັດທະນະທຳ ແລະ ການທ່ອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company ນະຄອນ ຫຼວງ

ທ່ານ ເນ້ຍ ເຫຼັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ຳ ຈົ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານແບບແຍກປະເພດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	2025 ກີບ	2024 ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	17	522,613,836	17,681,203,801
ລາຍຈ່າຍຈາກການດຳເນີນງານອື່ນໆ	18	(6,372,467,388)	(3,681,724,728)
ລາຍຈ່າຍໃນການບໍລິຫານ	19	(14,824,014,331)	(19,168,707,315)
ຂາດທຶນຈາກການດຳເນີນງານ		**(20,673,867,883)**	**(5,169,228,242)**
ລາຍຮັບທາງການເງິນ		108,198	375,073,915
ຕົ້ນທຶນທາງການເງິນ	20	(2,597,318,496)	-
ຂາດທຶນກ່ອນອາກອນ		**(23,271,078,181)**	**(4,794,154,327)**
ລາຍຈ່າຍອາກອນກຳໄລ	21	-	-
ຂາດທຶນສຸດທິຫຼັງອາກອນ		**(23,271,078,181)**	**(4,794,154,327)**

ທ່ານ ເນັຍເໜັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ຽ ຈົ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແບບແຍກກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ທຶນຈົດທະບຽນທີ່ ໄດ້ຖອກແລ້ວ ກີບ	*ສ່ວນເພີ່ມມູນຄ່າຮຸ້ນ ກີບ*	*ຄັງສຳຮອງຕາມ ລະບຽບການ ກີບ*	*ຄັງສຳຮອງເພື່ອ ຂະຫຍາຍອາຄານ ກີບ*	*ຂາດທຶນສະສົມ ກີບ*	*ລວມທັງໝົດ ກີບ*
ນະວັນທີ 1 ມັງກອນ 2024	20,002,000,000	18,385,975,511	7,704,052,546	18,549,465,596	(75,063,175,913)	(10,421,682,260)
ຂາດທຶນສຸດທິພາຍໃນປີ	-	-	-	-	(4,794,154,327)	(4,794,154,327)
ນະວັນທີ 31 ທັນວາ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(79,857,330,240)**	**(15,215,836,587)**
ນະວັນທີ 1 ມັງກອນ 2025	20,002,000,000	18,385,975,511	7,704,052,546	18,549,465,596	(79,857,330,240)	(15,215,836,587)
ຂາດທຶນສຸດທິພາຍໃນປີ	-	-	-	-	(23,271,078,181)	(23,271,078,181)
ນະວັນທີ 31 ທັນວາ 2025	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(103,128,408,421)**	**(38,486,914,768)**

ທ່ານ ເນັຍ ເຫຼັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ໃບລາຍງານກະແສເງິນສົດແບບແຍກກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*2025 ກີບ*	*2024 ກີບ*
ກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(23,271,078,181)**	**(4,794,154,327)**
ດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	381,163,375	404,116,126
ຫັກເງິນແຮ/(ການເກັບຄືນເງິນແຮ)ສຳລັບເຄື່ອງໃນ ສາງ		2,835,653,508	(8,723,578)
ການເກັບຄືນເງິນແຮສຳລັບໜີ້ທວງຍາກ		(37,936,200)	(49,416,000)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		1,173,876,086	(104,188,276)
ກຳໄລຈາກການຂາຍຊັບສິນ ແລະ ວັດຖຸດິບ		(478,350,000)	(5,254,392,318)
ລາຍຈ່າຍດອກເບ້ຍ		1,258,272,210	-
ການດັດແກ້ທຶນໝຸນວຽນ:			
ເພີ່ມຂຶ້ນຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບ ອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນ ທີ່ກ່ຽວຂ້ອງ		(540,006,399)	(1,750,520,938)
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(2,012,019,637)	(2,833,456,321)
ເພີ່ມຂຶ້ນຂອງເຄື່ອງໃນສາງ		(48,547,761,410)	(5,434,453,160)
ເພີ່ມຂຶ້ນຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງ ສົ່ງອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະໃຫ້ ພາກສ່ວນທີ່ກ່ຽວຂ້ອງ		62,624,889,713	5,466,788,186
ລາຍຮັບດອກເບ້ຍ		108,198	68,262
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳ ເນີນງານ		**(6,613,188,737)**	**(14,358,332,344)**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(107,577,381)	(589,856,436)
ລາຍຮັບຈາກການຂາຍຊັບສິນບັດຄົງທີ່		478,350,000	5,254,392,318
ການຈັດຊື້ຊັບສິນທີ່ບໍ່ມີຕົວຕົນ		(62,224,589)	-
ການລົງທຶນກັບບໍລິສັດໃນເຄືອ		(645,506,911)	(4,014,322,072)
ຊັບສິນພວມກໍ່ສ້າງ		(4,110,084,170)	(760,529,984)
ກະແສເງິນສົດສຸດທິນຳໃຊ້ກິດຈະກຳການລົງທຶນ		**(4,447,043,051)**	**(110,316,174)**

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານກະແສເງິນສົດແບບແຍກກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	2025 ກີບ	2024 ກີບ
ກິດຈະກຳການເງິນ			
ເພີ່ມເງິນກູ້ຢືມ		11,351,389,212	14,000,410,000
ຈ່າຍເງິນກູ້ຢືມ		(198,235,755)	(561,389,949)
ກະແສເງິນສົດສຸດທິຈາກກິດຈະກຳການ ເງິນ		**11,153,153,457**	**13,439,020,051**
ເງິນສົດເພີ່ມຂຶ້ນ/(ຫຼຸດລົງ)ສຸດທິ		92,921,669	(1,029,628,467)
ເງິນສົດຕົ້ນໄລຍະ		574,997,659	1,606,207,716
ຜົນກະທົບຈາກຄວາມຜັນຜວນຂອງອັດຕາ ແລກປ່ຽນ		48,999,133	(1,581,591)
ເງິນສົດປາຍໄລຍະ	**11**	**716,918,461**	**574,997,658**

ທ່ານ ເນ້ຍ ເຫຼ້ຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ເອກະສານຄັດຕິດ 06

ການສ້າງຕັ້ງບໍລິສັດ
ບໍລິຫານ ແບຣນກາເຟ ຈີແອລຊີ ຈຳກັດ

ເພື່ອເປັນການເຊື່ອມໂຍງຊັບພະຍາກອນອຸດສາຫະກຳກາເຟລາວ ແລະ ທ່າແຮງຂອງຕະຫຼາດຈີນ, ຊຸກຍູ້ການພັດທະນາແບບປະສົມປະສານລະຫວ່າງວັດທະນະທຳ ແລະ ການທ່ອງທ່ຽວ, ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ, ບໍລິສັດ ໄຫຫຽນ ການລົງທຶນ ເຕັກໂນໂລຊີ ກະສິກຳ ຈຳກັດ ແລະ ບໍລິສັດ ເອພີເອັຟ ຕິງ ແຕງ (ລາວ) ຈຳກັດ ເຫັນດີເປັນເອກະພາບກັນໂດຍອີງຕາມ " ກົດໝາຍວ່າດ້ວຍວິສາຫະກິດ " , " ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ " ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງຂອງ ສປປ ລາວ ເພື່ອຮ່ວມກັນສ້າງຕັ້ງ “ ບໍລິສັດ ບໍລິຫານ ແບຣນກາເຟ ຈີແອລຊີ ຈຳກັດ”.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຖືຫຸ້ນ 51% ຂອງບໍລິສັດດັ່ງກ່າວ, ບໍລິສັດ ໄຫຫຽນ ການລົງທຶນ ເຕັກໂນໂລຊີ ກະສິກຳ ຈຳກັດ ຖືຫຸ້ນ 34% ຂອງບໍລິສັດດັ່ງກ່າວ, ບໍລິສັດ ເອພີເອັຟ ຕິງ ແຕງ (ລາວ) ຈຳກັດ ຖືຫຸ້ນ 15% ຂອງບໍລິສັດດັ່ງກ່າວ.

ຈຶນຈົດທະບຽນຈຳນວນ 20 ຕື້ ກີບ, ນິຕິບຸກຄົນຂອງບໍລິສັດດັ່ງກ່າວແມ່ນທ່ານ ZHANG HAIJI, ຂອບເຂດທຸລະກິດແມ່ນໃຫ້ຄຳປຶກສາດ້ານເຕັກນິກການປູກກາເຟ, ການຈັດຊື້ ແລະ ປຸງແຕ່ງເມັດກາເຟ, ການບໍລິຫານແບຣນ ແລະ ຈຳໜ່າຍກາເຟ, ການພັດທະນາໂຄງການວັດທະນະທຳ ແລະ ການທ່ອງທ່ຽວກາເຟ, ການພັດທະນາ ແລະ ຈຳໜ່າຍອາຫານທີ່ກ່ຽວຂ້ອງ, ການນຳເຂົ້າ-ສົ່ງອອກ ແລະ ອື່ນໆ (ອີງຕາມການຈົດທະບຽນວິສາຫະກິດຕົວຈິງ).

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສາມັນສະພາບໍລິຫານ ສະໄໝທີ 10 ຄັ້ງທີ 7 ປີ 2026 ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອໃຫ້ບັນດາກຳມະການສະພາບໍລິຫານພິຈາລະນາ ແລະ ຮັບຮອງ.

ເອກະສານຕິດຄັດ 07

ສັນຍາວ່າດ້ວຍການຮັບເໝົາ ລວມວິສະວະກຳກໍ່ສ້າງພະຜຸດທະຮູບພູຜາບົວ

ສັນຍາວ່າດ້ວຍການຮັບເໝົາລວມວິສະວະກຳກໍ່ສ້າງພະຜຸດທະຮູບພູຜາບົວ ລະຫວ່າງ
ຜູ້ໃຫ້ຮັບເໝົາ : ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ກັບ
ຜູ້ຮັບເໝົາ 1 : ກຸ່ມບໍລິສັດ ຢຸນນານ ທາງລົດໄຟ ຈຳກັດ ແລະ
ຜູ້ຮັບເໝົາ 2 : ບໍລິສັດ ເອັສ ແຊັສ (ລາວ) ທີ່ປຶກສາດ້ານວິສະວະກຳ ຈຳກັດ

ອີງຕາມປະມວນກົດໝາຍແພ່ງ ຂອງ ສປປ ລາວ, ກົດໝາຍ ແລະ ກົດລະບຽບການທີ່ກ່ຽວຂ້ອງ, ສອງຝ່າຍເຫັນດີເປັນເອກະພາບກັນຕໍ່ການເຊັນສັນຍາຮັບເໝົາວິສະວະກຳກໍ່ສ້າງຂອງໂຄງການພະພຸດທະຮູບພູຜາບົວວັງວຽງສະບັບນີ້ ບົນຫຼັກການຄວາມສະເໝີພາບ ຄວາມສະໝັກໃຈ ຄວາມເປັນທຳ ແລະ ຄວາມຈິງໃຈໜ້າເຊື່ອຖື ເຊິ່ງມີເນື້ອໃນລະອຽດຄືດັ່ງລຸ່ມນີ້:

1. ຊື່ໂຄງການ: ໂຄງການພະຜຸດທະຮູບພູຜາບົວວັງວຽງ.

2. ທີ່ຕັ້ງໂຄງການ: ເມືອງວັງວຽງ ແຂວງວຽງຈັນ.

3. ແຫຼ່ງທຶນ: ວິສາຫະກິດປະກອບເອງ.

4. ເນື້ອໃນວິສະວະກຳ: ວຽກງານດິນ ແລະ ຫີນ , ພື້ນຖານ ແລະ ແທ່ນບູຊາພະພຸດທະຮູບໃຫຍ່, ຖະໜົນຫີນທາງ, ເຂດຂຽວ, ລະບົບສະໜອງ ແລະ ລະບາຍນ້ຳ, ລະບົບໄຟຟ້າ, ສິ່ງຕິດຕັ້ງການຊຸ້ມທ້ອທັດ ສິ່ງອຳນວຍຄວາມສະດວກປະກອບເປັນຊຸດ, ການຕົບແຕ່ງ, ການເຮັດ ແລະ ຕິດຕັ້ງພະພຸດທະຮູບ, ການເຮັດ ແລະ ຕິດຕັ້ງຮູບປັ້ນ, ການຕົບແຕ່ງສີລະປະວັດທະນະທຳທາງສາສະໜາພາຍໃນ, ການຕົບແຕ່ງພາບທ້ອທັດສີລະປະວັດທະນະທຳທາງສາສະໜາພາຍນອກ ແລະ ວຽກງານອື່ນໆທັງໝົດທີ່ລະບຸໄວ້ໃນແຜນຜັງການກໍ່ສ້າງ. ເນື້ອທີ່ທັງໝົດປະມານ 96 ເຮັກຕາ.

ໃນນັ້ນ: ເນື້ອໃນວຽກງານຂອງຝ່າຍຮັບເໝົາ 1 ແມ່ນ ວຽກງານດິນ ແລະ ຫີນ , ພື້ນຖານ ແລະ ແທ່ນບູຊາພະພຸດທະຮູບໃຫຍ່, ຖະໜົນຫີນທາງ, ເຂດຂຽວ, ລະບົບສະໜອງ ແລະ ລະບາຍນ້ຳ, ລະບົບໄຟຟ້າ, ສິ່ງຕິດຕັ້ງການຊຸ້ມທ້ອທັດ,ສິ່ງອຳນວຍຄວາມສະດວກປະກອບເປັນຊຸດ,ການຕົບແຕ່ງ ແລະ ວຽກງານອື່ນໆ ທັງໝົດທີ່ລະບຸໄວ້ໃນແຜນຜັງການກໍ່ສ້າງ.

ເນື້ອໃນວຽກງານຂອງຝ່າຍຮັບເໝົາ 2 ແມ່ນ ການເຮັດ ແລະ ຕິດຕັ້ງພະພຸດທະຮູບ, ການເຮັດ ແລະ ຕິດຕັ້ງຮູບປັ້ນ, ການຕົບແຕ່ງສີລະປະວັດທະນະທຳທາງສາສະໜາພາຍໃນ, ການຕົບແຕ່ງພາບທ້ອທັດສີລະປະວັດທະນະທຳທາງສາສະໜາພາຍນອກ ແລະ ວຽກງານອື່ນໆທັງໝົດທີ່ລະບຸໄວ້ໃນແຜນຜັງການກໍ່ສ້າງ.

ເນື້ອໃນວຽກງານຂອງຝ່າຍຮັບເໝົາແມ່ນເອົາແຜນຜັງການກໍ່ສ້າງເປັນທາງການຂອງຝ່າຍໃຫ້ຮັບເໝົາເປັນຫຼັກ ທັງສອງຝ່າຍຈະເຊັນສັນຍາເພີ່ມເຕີມຕ່າງຫາກ. ເນື້ອໃນວຽກງານຂອງຝ່າຍຮັບເໝົາສາມາດປັບຕາມຄວາມຕ້ອງການຂອງຝ່າຍໃຫ້ຮັບເໝົາ.

ສັນຍາເພີ່ມເຕີມທີ່ທັງສອງຝ່າຍເຊັນຕ່າງຫາກ ນອກຈາກເນື້ອໃນວຽກງານ ກໍຕ້ອງລະບຸຢ່າງຈະແຈ້ງ ກ່ຽວກັບພັນທະ ແລະ ໜ້າທີ່ຮັບຜິດຊອບຂອງສອງຝ່າຍ.

5. ຂອບເຂດການຮັບເໝົາວິສະວະກຳ: ລວມແຕ່ບໍ່ຈຳກັດເຂົ້າ-ອອກສະຖານທີ່, ກະກຽມການກໍ່ສ້າງ, ວິ

ສະອະກຳຊົ່ວຄາວ, ສິ່ງຕິດຕັ້ງຊົ່ວຄາວ, ສຳເລັດການກໍ່ສ້າງຕາມແຜນຜັງອອກແບບ, ການຜະລິດດ້ວຍຄວາມປອດໄພ, ມາດຕະການກໍ່ສ້າງສີວິໄລ, ການດູເລວິສະວະກຳ, ການຮັບປະກັນວິສະວະກຳ, ການມ້າງ ແລະ ຂົນສົ່ງອອກສິ່ງປຸກສ້າງຄົງຄ້າງພາຍໃນສະຖານທີ່ກໍ່ສ້າງ,ເນື້ອໃນວຽກງານລະອຽດເອິນແຜນຜັງກໍ່ສ້າງ, ການອອກແບບໃໝ່ໃນລະຫວ່າງກໍ່ສ້າງ ແລະ ເອກະສານການປ່ຽນແປງຂອງຝ່າຍໃຫ້ຮັບເໝົາເປັນຫຼັກ.

6. ກຳນົດເວລາການກໍ່ສ້າງ

- ວາງແຜນຈະເລີ່ມກໍ່ສ້າງໃນວັນທີ.....ປີ 2024 (ເອົາແຈ້ງການເລີ່ມຕົ້ນກໍ່ສ້າງເປັນຫຼັກ)
- ວາງແຜນຈະສຳເລັດກໍ່ສ້າງໃນວັນທີ
- ໄລຍະເວລາການກໍ່ສ້າງທັງໝົດຈຳນວນ.....ວັນ.

7. ມູນຄ່າການກໍ່ສ້າງທີ່ລະບຸໄວ້ໃນສັນຍາ: 511.205.088,98 ຢວນ (ຫ້າຮ້ອຍສິບເອັດລ້ານສອງແສນຫ້າພັນແປດສິບແປດຈຸດເກົ້າແປດ ຢວນ), ໃນນັ້ນ, ຈຳນວນເງິນການກໍ່ສ້າງຂອງຝ່າຍຮັບເໝົາ 1 ແມ່ນ 451.205.088,98 ຢວນ (ສີ່ຮ້ອຍຫ້າສິບເອັດລ້ານສອງແສນຫ້າພັນແປດສິບແປດຈຸດເກົ້າແປດ ຢວນ), ຈຳນວນເງິນການກໍ່ສ້າງຂອງຝ່າຍຮັບເໝົາ 2 ແມ່ນ 60.000.000 ຢວນ (ຫົກສິບລ້ານ ຢວນ). ຈຳນວນເງິນສຸດທ້າຍຂຶ້ນກັບການໄລ່ລຽງຕົວຈິງຂອງຝ່າຍໃຫ້ຮັບເໝົາ.

ສ່ວນບັນຫາອາກອນໃຫ້ສອງຝ່າຍເຈລະຈາ ແລະ ກຳນົດຢ່າງຈະແຈ້ງຮູບແບບການຊຳລະ ແລະ ຈຳນວນເງິນເປັນລາຍຫຼັກອັກສອນໂດຍອີງຕາມກົດໝາຍ ແລະ ລະບຽບການຂອງສອງປະເທດ.

8. ຜູ້ອຳນວຍການໂຄງການ

- ຝ່າຍຮັບເໝົາ 1 : ກຸ່ມບໍລິສັດ ຢຸນນານ ທາງລົດໄຟ ຈຳກັດ
- ຊື່ຜູ້ອຳນວຍການໂຄງການ: ທ່ານ ຈົ່ງ ໂຢຍເຊີນ (ນັກກໍ່ສ້າງລະດັບ 2)
- ບັດປະຈຳຕົວເລກທີ: 532101199601073O1X
- ເບີໂທຕິດຕໍ່: 15198775242
- ຝ່າຍຮັບເໝົາ 2 : ບໍລິສັດ ເອັສ ແຊັສ (ລາວ) ທີ່ປຶກສາດ້ານວິສະວະກຳ ຈຳກັດ
- ຜູ້ອຳນວຍການໂຄງການ: ທ່ານ ຕ້ອນ ຊີຈຸ່ນ (ນັກກໍ່ສ້າງລະດັບ 2)
- ບັດປະຈຳຕົວເລກທີ: 533001199004296O5X
- ເບີໂທຕິດຕໍ່: 15912553187

ຜູ້ອຳນວຍໂຄງການໄດ້ຮັບການມອບສິດຈາກຜູ້ຮັບເໝົາຄືດັ່ງນີ້: ຄຸ້ມຄອງຄຸນນະພາບ, ຄວາມຄືບໜ້າ, ຄວາມປອດໄພ, ຄວາມລະບຽບຮຽບຮ້ອຍ ແລະ ສັນຍາຂອງໂຄງການ, ຕາງໜ້າຝ່າຍຮັບເໝົານຳໃຊ້ສິດທົ່ວໄປ ແລະ ປະຕິບັດພັນທະ, ເອກະສານລາຍຫຼັກອັກສອນທຸກສະບັບທີ່ອອກໂດຍຜູ້ຮັບເໝົາ ລວມທັງແຈ້ງການ, ໃບຢັ້ງຢືນວຽກງານ, ໜັງສືແຈ້ງຕອບ, ບົດບັນທຶກກອງປະຊຸມ ຈະມີຜົນສັກສິດທາງກົດໝາຍເມື່ອໄດ້ຮັບການເຊັນຊື່ຢັ້ງຢືນ ແລະ ປະທັບກາຈາກຜູ້ອຳນວຍໂຄງການຂອງແຕ່ລະຝ່າຍ.

9. ສັນຍາສະບັບນີ້ປະກອບດ້ວຍ:

- ຂໍ້ມາດຕາສັນຍາພິເສດ ແລະ ເອກະສານຕິດຄັດ
- ຂໍ້ມາດຕາສັນຍາທົ່ວໄປ
- ມາດຕະຖານເຕັກນິກ
- ແຜນຜັງ
- ເອກະສານອື່ນໆກ່ຽວຂ້ອງກັບສັນຍາ

ເອກະສານກ່ຽວຂ້ອງກັບສັນຍາທີ່ສ້າງຂຶ້ນໃນເມື່ອເຊັນສັນຍາ ແລະ ປະຕິບັດສັນຍາ ລ້ວນແລ້ວແຕ່ແມ່ນສ່ວນປະກອບຂອງສັນຍາ.

10. ຄຳໝັ້ນສັນຍາ
    - ຜູ້ໃຫ້ຮັບເໝົາ ຮັບປະກັນຈະດຳເນີນເອກະສານອະນຸຍາດກໍ່ສ້າງຕາມກົດລະບຽບການທີ່ກ່ຽວຂ້ອງ, ປະກອບທຶນກໍ່ສ້າງດ້ວຍຕົນເອງ ແລະ ຊຳລະຕາມທີ່ໄດ້ກຳນົດໄວ້ໃນສັນຍາ.
    - ຜູ້ຮັບເໝົາ ຮັບປະກັນໃຫ້ໂຄງການກໍ່ສ້າງສຳເລັດຕາມກົດລະບຽບການທີ່ກ່ຽວຂ້ອງ ແລະ ສັນຍາທີ່ເຊັນຮ່ວມກັນ, ຮັບປະກັນຄຸນນະພາບ ແລະ ການໄດ້ມາດຕະຖານຂອງການກໍ່ສ້າງ ບໍ່ຮັບເໝົາຊ່ວງຕໍ່ທີ່ຜິດກົດໝາຍ ແລະ ຮັບຜິດຊອບວຽກການປັບປຸງສ້ອມແປງພາຍໃນກຳນົດເວລາຮັບ ປະກັນ.
11. ມື້ເຊັນສັນຍາ: ວັນທີ.....ປີ 2024.
12. ສະຖານທີ່ເຊັນສັນຍາ: ທີ່ນະຄອນຫຼວງວຽງຈັນ ສປປ ລາວ.
13. ສັນຍາສະບັບນີ້ຈະມີຜົນສັກສິດໃຊ້ນັບຕັ້ງແຕ່ມື້ລົງລາຍເຊັນ ແລະ ຈົ້ຳກາເປັນຕົ້ນໄປ.
14. ສັນຍາສະບັບນີ້ສ້າງຂຶ້ນ 15 ສະບັບ ມີຜົນສັກສິດເທົ່າທຽມກັນທາງດ້ານກົດໝາຍ ໂດຍຝ່າຍໃຫ້ຮັບເໝົາຮັກສາ 5 ສະບັບ, ຜູ້ຮັບເໝົາ 1 ຮັກສາ 5 ສະບັບ ແລະ ຜູ້ຮັບເໝົາ 2 ຮັກສາ 5 ສະບັບ.
15. ສຳລັບບັນຫາທີ່ບໍ່ໄດ້ລະບຸໄວ້ໃນສັນຍາສະບັບນີ້ ສອງຝ່າຍຈະເຊັນສັນຍາເພີ່ມເຕີມຕ່າງຫາກ ເຊິ່ງເປັນພາກສ່ວນຂອງສັນຍາສະບັບນີ້ ມີຜົນສັກສິດໃຊ້ເທົ່າທຽມກັນກັບສັນຍາສະບັບນີ້.

ຜູ້ໃຫ້ຮັບເໝົາ: ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ຈົ້ຳກາ) ຜູ້ຕາງໜ້າຖືກົດໝາຍ ຫຼືຜູ້ຮັບການມອບສິດ (ເຊັນ)
ຜູ້ຮັບເໝົາ 1 : ກຸ່ມບໍລິສັດ ຢຸນນານ ທາງລົດໄຟ ຈຳກັດ (ຈົ້ຳກາ) ຜູ້ຕາງໜ້າຖືກົດໝາຍ ຫຼືຜູ້ຮັບການມອບສິດ (ເຊັນ)
ຜູ້ຮັບເໝົາ 2 : ບໍລິສັດ ເອັສ ແຊັສ (ລາວ) ທີ່ປຶກສາດ້ານວິສະວະກຳ ຈຳກັດ (ຈົ້ຳກາ) ຜູ້ຕາງໜ້າຖືກົດໝາຍ ຫຼືຜູ້ຮັບການມອບສິດ (ເຊັນ)

ສັນຍາດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 3 ປີ 2025 ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອໃຫ້ບັນດາກຳມະການສະພາບໍລິຫານພິຈາລະນາ ແລະ ຮັບຮອງ.

ເອກະສານຄັດຕິດ 08

ການປ່ຽນຊື່ ບໍລິສັດ
ບໍລິການອາງສະແດງສາກົນລາວ ຈຳກັດຜູ້ດຽວ

ເນື່ອງຈາກຄວາມຕ້ອງການຂອງການດຳເນີນທຸລະກິດ ແລະ ການພັດທະນາ ຂອງບໍລິສັດ ຜ່ານການປຶກສາຫາລືຂອງຄະນະອຳນວຍການ ເຫັນດີເປັນເອກະພາບ ກັນປ່ຽນຊື່ ບໍລິສັດ ບໍລິການອາງສະແດງສາກົນລາວ ຈຳກັດຜູ້ດຽວ ເປັນ ບໍລິສັດ ດຳ ເນີນງານ ແລະ ບໍລິຫານ ເຂດທ່ອງທ່ຽວ ພູຜາບົວ ລາວ ຈຳກັດຜູ້ດຽວ.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມວິສາມັນ ສະພາບໍລິຫານ ຄັ້ງທີ 4 ປີ 2025 ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອໃຫ້ບັນດາກຳມະການສະພາບໍລິຫານພິຈາ ລະນາ ແລະ ຮັບຮອງ.

ການປ່ຽນຂາ**ຮຸ້ນຂອງ**
ບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ

ເນື່ອງຈາກຄວາມຕ້ອງການຂອງການດຳເນີນທຸລະກິດ ແລະ ການພັດທະນາ ຂອງບໍລິສັດ ຜ່ານການປຶກສາຫາລືຂອງຄະນະອຳນວຍການ ເຫັນດີເປັນເອກະພາບ ກັນໂອນຮຸ້ນທັງໝົດທີ່ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຖືຄອງຢູ່ ໃນບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ ຈຳນວນ 20% ໃຫ້ແກ່ທ່ານ ໂຈວ ຊຸ້ນໂກວ (Mr ZhouXunguo).

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມວິສາມັນ ສະພາບໍລິຫານ ຄັ້ງທີ 6 ປີ 2025 ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອໃຫ້ບັນດາກຳມະການສະພາບໍລິຫານພິ ຈາລະນາ ແລະ ຮັບຮອງ.

ເອກະສານຄັດຕິດ 10

ການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນ ຂອງບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ

ເນື່ອງຈາກຄວາມຕ້ອງການຂອງການດຳເນີນທຸລະກິດ ແລະ ການພັດທະນາຂອງບໍລິສັດ ຜ່ານການປຶກສາຫາລືຂອງຄະນະອຳນວຍການ ເຫັນດີເປັນເອກະພາບກັນ ໃຫ້ບໍລິສັດ ລາວ ຟານຊິ່ງທີ່ປຶກສາ ແລະ ຄຸ້ມຄອງການລົງທຶນ ຈຳກັດຜູ້ດຽວ ເພີ່ມທຶນຈົດທະບຽນໃຫ້ແກ່ ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ ໃນຈຳນວນ 1.921.600.000,00 ກີບ. ຫຼັງຈາກເພີ່ມທຶນຈົດທະບຽນແລ້ວ, ທຶນຈົດທະບຽນຂອງບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ ຈາກ 2.000.000.000,00 ກີບ ຈະເພີ່ມເປັນ 3.921.600.000,00 ກີບ , ພ້ອມກັນນັ້ນ, ບໍລິສັດ ລາວ ຟານຊິ່ງທີ່ປຶກສາ ແລະ ຄຸ້ມຄອງການລົງທຶນ ຈຳກັດຜູ້ດຽວ ກໍຈະກາຍເປັນ ຂາຍຮຸ້ນທີ່ຖືຮຸ້ນ 49% ຢູ່ໃນບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ, ສ່ວນກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຈະຖືຮຸ້ນ 51% ຂອງບໍລິສັດ ດັ່ງກ່າວ.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 7 ປີ 2025 ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອໃຫ້ບັນດາກຳມະການສະພາບໍລິຫານພິຈາລະນາ ແລະ ຮັບຮອງ.

ເອກະສານຄັດຕິດ 11

ໃບມອບສິດ

ຂ້າພະເຈົ້າ.....ສັນຊາດ.....
ບັດປະຈຳຕົວ/ບັດສະປໍເລກທີ..... ID card/passport NO:.....
ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....
ເປັນຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ມີຮຸ້ນທີ່ຖືຈຳນວນ.....
ຮຸ້ນ ເຊິ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ.

ຂໍມອບໝາຍ ທ່ານ/ທ່ານນາງ.....ບັດປະຈຳຕົວ/ບັດສະປໍເລກທີ.....
ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....
ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະ ເຈົ້າຢູ່ໃນກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ຈະຈັດຂຶ້ນ ໃນວັນທີ 4 ພຶດສະພາ 2026 ຢູ່ຫ້ອງປະຊຸມໃຫ່ຍ ຊັ້ນ 4 ບໍລິສັດລັດວິສາຫະກິດ ພັດທະນາກະສິກຳ - ອຸດສາຫະກຳ ບໍລິການ ແລະ ການຄ້າຂາອອກ-ຂາເຂົ້າ ນະຄອນຫຼວງວຽງຈັນ.

1. ຂ້າພະເຈົ້າອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກໜຶ່ງ ຈາກສອງທາງເລືອກລຸ່ມນີ້)

□ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວສົມຄວນ;

□ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນເຫັນດີ ຫຼື ບໍ່ເຫັນດີໃນທຸກໆວາລະລຸ່ມນີ້)

ວາລະທີ 1	ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024	□ເຫັນດີ □ບໍ່ເຫັນດີ
ວາລະທີ 2	ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ່ 1 ປະຈຳປີ 2025	□ເຫັນດີ □ບໍ່ເຫັນດີ
ວາລະທີ 3	ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2025	□ເຫັນດີ □ບໍ່ເຫັນດີ
ວາລະທີ 4	ບົດລາຍງານການເງິນ ປະຈຳປີ 2025	□ເຫັນດີ □ບໍ່ເຫັນດີ
ວາລະທີ 5	ການສ້າງຕັ້ງບໍລິສັດ ບໍລິຫານ ແບຣນກາເຟ ຈີແອລຊີ ຈຳກັດ	□ເຫັນດີ □ບໍ່ເຫັນດີ
ວາລະທີ 6	ສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບພູຜາບ໊ວ	□ເຫັນດີ □ບໍ່ເຫັນດີ
ວາລະທີ 7	ການປ່ຽນຊື່ບໍລິສັດ ບໍລິການອາງສະແດງສາກົນລາວ ຈຳກັດຜູ້ດຽວ	□ເຫັນດີ □ບໍ່ເຫັນດີ
ວາລະທີ 8	ການປ່ຽນຂາຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ	□ເຫັນດີ □ບໍ່ເຫັນດີ
ວາລະທີ 9	ການເພີ່ມທຶນຈົດທະບຽນ ແລະຂາຮຸ້ນຂອງບໍລິສັດສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	□ເຫັນດີ □ບໍ່ເຫັນດີ

2. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນ ການລົງຄະແນນຂອງຂ້າພະເຈົ້າ.

3. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດ ໜຶ່ງ ຫຼື ລະບຸໄວ້ບໍ່ຈະແຈ້ງ ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

4. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.

5. ໃບມອບສິດສະບັບນີ້ມີຜົນສັກສິດໃຊ້ຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ທີ່.....ວັນທີ...../.....2026

ເຊັນຜູ້ຖືຮຸ້ນທີ່ມອບໝາຍ **ເຊັນຜູ້ຕາງໜ້າ**

ແຜນທີ່ ບໍລິສັດ ລັດວິສາຫະກິດ ພັດທະນາທະສິກໍ-ອຸດສາຫະກຳບໍລິການ ແລະ ການຄ້າ ຂາອອກ-ຂາເຂົ້າ



